ແຜນງານບົດວາ
ແຜນງານການປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນ
ສຳລັບການສຶກສາຂັ້ນພື້ນຖານ ໃນ ສປປ ລາວ

# BEQUAL Phase 2

Basic Education Quality and Access in Lao PDR



## Ministry of Education and Sports and Australia strengthen internal pedagogical support to improve teaching quality

## Media Report

**15 Aug to 3 Sep 2025**

ແຜນງານການປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນ ສຳລັບການສຶກສາຂັ້ນພື້ນຖານ ໃນ ສປປ ລາວ
ຄຸ້ມຄອງໂດຍບໍລິສັດເທດທຣາເທັກ ຕາງໜ້າໃຫ້ລັດຖະບານອົດສະຕຣາລີ
Basic Education Quality and Access in Lao PDR is managed by Tetra Tech International Development on behalf of the Australian Government.

## Summary table of all releases

| Date | Media Type | Media Name | Details |
|---|---|---|---|
| 2025-08-28 | Newspaper | Savanhphathana | Front and Page 6 |
| 2025-08-29 | Newspaper | Pathedlao | Front and Page 4 |
| 2025-09-01 | Newspaper | Army | Page 6 |
| 2025-09-01 | Newspaper | Vientiane Mai | Page 2 |
| 2025-09-01 | Newspaper | Pasaxon | Page 12 |
| 2025-09-03 | Newspaper | Public Security | Page 2 |
| 2025-08-15 | Social media | Savannakhet Radio-Television Facebook | 22K Followers |
| 2025-08-25 | Social media | Sing District Luang Namtha Radio Facebook | 4.6K Followers |
| 2025-08-26 | Social media | Songkhone DESB Facebook | 2.1K Followers |
| 2025-08-26 | Social media | Xiengkhouang Radio-Television Facebook | 112K Followers |
| 2025-08-27 | Social media | Savannakhet Teacher Training College Facebook | 18K Followers |
| 2025-08-27 | Social media | Songkhone DESB Facebook (2nd times) | 2.1K Followers |
| 2025-08-27 | Social media | Economic and Commerce Facebook | 676K Followers |
| 2025-08-27 | Social media | Savannakhet Teacher Training College Facebook (2nd times) | 18K Followers |
| 2025-08-27 | Social media | Vientiane Radio FM 105.5 Facebook | 87K Followers |
| 2025-08-27 | Social media | Edu-Sport Daily News Facebook | 13K Followers |
| 2025-08-27 | Social media | Lao National Radio FM 103.7 | 177K Followers |
| 2025-08-27 | Social media | Xiengkhouang Mixay Newspaper Facebook | 7.9K Subscribers |
| 2025-08-28 | Social media | Pathedlao Facebook | 390K Followers |
| 2025-08-28 | Social media | Edu-Sport TV online Facebook | 76K Followers |
| 2025-08-28 | Social media | Information Media Centre Facebook | 11K Followers |
| 2025-08-28 | Social media | Luang Namtha News Facebook | 7.2K Followers |
| 2025-08-28 | Social media | Khangkhay Teacher Training College Facebook | 2.5K Followers |
| 2025-08-28 | Social media | Lao Security News Facebook | 152K Followers |
| 2025-08-28 | Social media | Savanhphathana News Facebook | 38K Followers |
| 2025-08-28 | Social media | Laos News KPL Facebook | 15K Followers |
| 2025-08-29 | Social media | Lao People's army news Facebook | 147K Followers |
| 2025-08-29 | Social media | Luang Namtha Television Facebook | 56K Followers |
| 2025-08-29 | Social media | TV Savannakhet Facebook | 71K Followers |

| | | | |
|---|---|---|---|
| 2025-08-30 | Social media | Lao National Radio FM 103.7 | 177K Followers |
| 2025-07-16 | Website | Laoedaily.com | Read article in Lao here |
| 2025-07-16 | Website | KPL English | Read article in English here |
| 2025-08-27 | Website | BEQUAL | Read article in English here<br>Read article in Lao here |
| 2025-08-28 | Radio | Army Radio FM 99.7 | |
| 2025-08-28 | Radio | Public Security Radio FM 101.5 | |
| 2025-08-28 | Radio | Lao National Radio FM 103.7 | |
| 2025-08-28 | Radio | Vientiane Radio FM 105.5 | |
| 2025-08-30 | Radio | Education news FM 103.7 MHZ | |
| 2025-08-26 | TV | Xiengkhouang Radio-Television | Watch TV news here |
| 2025-08-29 | TV | Luang Namtha Television | Watch TV news here |
| 2025-08-29 | TV | Savannakhet Television | Watch TV news here |
| 2025-08-27 | WhatsApp | MT-PT WhatsApp and FB groups | 19 groups with trainers<br>+/- 713 members |
| 2025-08-27 | WhatsApp | PESS-DESB | 18 Provincial groups<br>426 members |
| 2025-08-27 | WhatsApp | Pre-Service Writing team | 8 TTCs and 2 universities<br>73 members |
| 2025-08-27 | WhatsApp | Target DESB | Teacher Dev Units in 30 target districts<br>64 members |
| 2025-08-27 | WhatsApp | Target TTC | Key coordinators from the 3 target TTCs 17 members |
| 2025-08-27 | WhatsApp | IPS | in targeted provinces-LNT, XKH, SVK- 8 Districts in XKH, 12 Districts |
| 2025-08-27 | WhatsApp | Teaching Standard Review group | MT-PT- 28 members |

## Pictures of articles in the media

| 2025-08-28 | Newspaper | Savanhphathana | Front and Page 6 |
|---|---|---|---|

# ເຝິກອົບຮົມວຽກງານພັດທະນາວິຊາຊີບຄູແບບຕໍ່ເນື່ອງໃຫ້ແກ່ຜູ້ເຮັດວຽກສຶກສານິເທດຄັ້ງທີ ໖



ໃນລະຫວ່າງວັນທີ 25-29 ສິງຫາ 2025, ກະຊວງສຶກສາທິການ ແລະກິລາແຫ່ງ ສປປ ລາວ (ສສກ) ເຊິ່ງໄດ້ຮັບການສະໜັບສະໜູນຈາກລັດຖະບານອົດສະຕຣາລີ ໂດຍຜ່ານແຜນງານການຄຸນະພາບ ແລະຂະຫຍາຍໂອກາດເຂົ້າຮຽນສຳລັບການສຶກສາຂັ້ນພື້ນຖານໃນ ສປປ ລາວ (ແຜນງານບີຄວາ) ໄດ້ດຳເນີນການຝຶກອົບຮົມຮອບທີ 6 ໃຫ້ແກ່ຜູ້ເຮັດວຽກສຶກສານິເທດພາຍໃນໄດ້ຈັດກອງປະຊຸມເຝິກອົບຮົມວຽກງານພັດທະນາວິຊາຊີບຄູແບບຕໍ່ເນື່ອງໃຫ້ແກ່ຜູ້ເຮັດວຽກສຶກສານິເທດພາຍໃນຄັ້ງທີ 6 ສຳລັບຊັ້ນປະຖົມສຶກສາ ພາຍໃຕ້ການສະໜັບສະໜູນຂອງໂຄງການບີຄວາໄລຍະ 2, ຢູ່ທີ່ມປາຍແກ້ງກອກພາຍໃຕ້ການເປັນປະທານຂອງທ່ານ ສີປະເສີດ ໄຊຍະລິນ ຫົວໜ້າຫ້ອງການສຶກສາທິການ ແລະກິລາເມືອງຈຳພອນ, ມີວິທະຍາກອນມາຈາກວິທະຍາໄລສ້າງຄູສະຫວັນນະເຂດຈຳນວນ 4 ທ່ານ, ຫົວໜ້າໜ່ວຍງານຈັດຕັ້ງ-ພະນັກງານ, ໜ່ວຍງານພັດທະນາຄູ ແລະໜ່ວຍງານການສຶກສາກ່ອນໄວຮຽນ, ສາມັນ

ອ່ານຕໍ່ໜ້າ ໖

### ເຝິກອົບຮົມ ...

ແລະວິທະຍາສາດ, ທີມງານວິຊາການຂັ້ນເມືອງ ແລະບັນດາທ່ານຜູ້ເຮັດວຽກສຶກສານິເທດພາຍໃນ ຈຳນວນ 54 ທ່ານເຂົ້າຮ່ວມ.

ກອງປະຊຸມດັ່ງກ່າວໄດ້ຝຶກຄື: ຝຶກອົບຮົມວິຊາພາສາລາວຂັ້ນ ປ1, ຝຶກການສອນຫ້ອງຄວບ (ສ່ວນທີ1), ຝຶກການສອນຫ້ອງຄວບ (ສ່ວນທີ 2), ການສອນຫ້ອງຄວບ (ສ່ວນທີ 3), ການສະທ້ອນຄືນການຈັດຕັ້ງປະຕິບັດ SLP (ສ່ວນທີ 1), ການສອນສາທິດການຝຶກເວົ້າພາສາລາວ SLP (ສ່ວນທີ 2), ເຄື່ອງມືການປະເມີນຕົນເອງຂອງຄູ (ສ່ວນທີ1), ເຄື່ອງມືປະເມີນຕົນເອງຂອງຄູ (ສ່ວນທີ 2), ການສຶກສາຮຽນຮ່ວມ ແລະບັນທັດຖານທາງສັງຄົມ, ການວາງແຜນສຳລັບພາກຮຽນທີ 1 ສົກຮຽນ 2025-2026, ນອກນີ້ ຍັງໄດ້ມີການປະເມີນກ່ອນຝຶກ ແລະປະເມີນຫຼັງຝຶກອົບຮົມ, ພາຍຫຼັງສຳເລັດກອງປະຊຸມກໍ່ຍັງມີການມອບໃບຢັ້ງຢືນໃຫ້ແກ່ຄູສຳມະນາກອນທີ່ເຂົ້າຮ່ວມຈຳນວນ 54 ທ່ານ.

ເຊິ່ງລະບົບຜູ້ເຮັດວຽກສຶກສານິເທດພາຍໃນໄດ້ຖືກສ້າງຂຶ້ນໃນປີ 2023 ເພື່ອຮັບປະກັນວ່າ ຄູສອນຊັ້ນປະຖົມສຶກສາ, ໂດຍສະເພາະຜູ້ທີ່ຢູ່ໃນເຂດຫ່າງໄກ ແລະຜູ້ດ້ອຍໂອກາດຈະໄດ້ຮັບການຊ່ວຍເຫຼືອຢ່າງເປັນປົກກະຕິດ້ານວິຊາການ ແລະເປັນລະບົບແບບເພື່ອນ-ຊ່ວຍ-ເພື່ອນຕະຫຼອດສົກຮຽນ. ລະບົບນີ້ສ້າງຕັ້ງຂຶ້ນໂດຍ ສສກ ໂດຍໄດ້ຮັບການສະໜັບສະໜູນຈາກລັດຖະບານອົດສະຕຣາລີ, ລະບົບດັ່ງກ່າວໄດ້ໃຫ້ບູລິມະສິດແກ່ຄູສອນທີ່ມີປະສົບການ ແລະຜູ້ອຳນວຍການໂຮງຮຽນ ເພື່ອເຮັດໜ້າທີ່ເປັນຄູຝຶກ ແລະຜູ້ໃຫ້ຄຳແນະນຳການສອນໃນໂຮງຮຽນ. ຜູ້ເຮັດວຽກສຶກສານິເທດພາຍໃນ ຈະຊ່ວຍໃຫ້ເພື່ອນຮ່ວມງານປັບປຸງການປະຕິບັດການສິດສອນຂອງເຂົາເຈົ້າ ໂດຍການນຳພາການພັດທະນາວິຊາຊີບຄູແບບຕໍ່ເນື່ອງຜ່ານການໃຫ້ຄຳແນະນຳຢ່າງເປັນປົກກະຕິ, ການສັງເກດການສອນ, ການສອນເປັນຄູ່, ການໃຫ້ຄຳຄິດຄຳເຫັນ ແລະການຕິດຕາມການປະຕິບັດຄຳແນະນຳ. ໃນເບື້ອງຕົ້ນລະບົບດັ່ງກ່າວມີຢູ່ 30 ເມືອງເປົ້າໝາຍໃນ 7ແຂວງທີ່ໄດ້ຮັບການສະໜັບສະໜູນ ຈາກແຜນງານບີຄວາຄື: ຜົ້ງສາລີ, ຫຼວງນ້ຳທາ, ບໍ່ແກ້ວ, ຫົວພັນ, ຊຽງຂວາງ, ຄຳມ່ວນ ແລະສະຫວັນນະເຂດ./.

| 2025-08-29 | Newspaper | Pathedlao | Front and Page 4 |
|---|---|---|---|

# ສ້າງຄວາມເຂັ້ມແຂງໃຫ້ຜູ້ເຮັດວຽກສຶກສານິເທດພາຍໃນ

ຂປລ. ໃນລະຫວ່າງວັນທີ 4-29 ສິງຫາ 2025 ນີ້, ກະຊວງສຶກສາທິການ ແລະ ກິລາ ຈັດຝຶກອົບຮົມໃຫ້ແກ່ຜູ້ເຮັດວຽກສຶກສານິເທດພາຍໃນສຳລັບ 30 ເມືອງເປົ້າໝາຍຂອງແຜນງານບີຄວາ ໂດຍໄດ້ຮັບການສະໜັບສະໜູນຈາກລັດຖະບານອົດສະຕຣາລີ ໂດຍຜ່ານແຜນງານການປັບປຸງຄຸນ

ຕໍ່ໜ້າ 4

**ສ້າງຄວາມເຂັ້ມແຂງ...**

*** ຕໍ່ຈາກໜ້າ 1 ***

ນະພາບ ແລະ ຂະຫຍາຍໂອກາດເຂົ້າເຖິງການສຶກສາຂັ້ນພື້ນຖານໃນ ສປປ ລາວ ຫລື ແຜນງານບີຄວາ. ລະບົບຜູ້ເຮັດວຽກສຶກສານິເທດພາຍໃນ ສ້າງຂຶ້ນໃນປີ 2023 ເພື່ອຮັບປະກັນວ່າຄູສອນຊັ້ນປະຖົມສຶກສາ ໂດຍສະເພາະຜູ້ທີ່ຢູ່ເຂດຫ່າງໄກ ແລະ ຜູ້ດ້ອຍໂອກາດຈະໄດ້ຮັບການຊ່ວຍເຫລືອຢ່າງເປັນປົກກະຕິດ້ານວິຊາການ ແລະ ເປັນລະບົບແບບເພື່ອນຊ່ວຍເພື່ອນຕະຫລອດສົກຮຽນ ໂດຍໄດ້ຮັບການສະໜັບສະໜູນຈາກລັດຖະບານອົດສະຕຣາລີ, ໃນເບື້ອງຕົ້ນລະບົບດັ່ງກ່າວມີຢູ່ 30 ເມືອງເປົ້າໝາຍ ໃນ 7 ແຂວງທີ່ໄດ້ຮັບການສະໜັບສະໜູນຈາກແຜນງານບີຄວາ ຄື: ແຂວງຜົ້ງສາລີ, ຫລວງນ້ຳທາ, ບໍ່ແກ້ວ, ຫົວພັນ, ຊຽງຂວາງ, ຄຳມ່ວນ, ແຂວງສະຫວັນນະເຂດ ແລະ ມີແຜນຈະຂະຫຍາຍໄປແຂວງອື່ນໆຕື່ມອີກ.

ທ່ານ ນາງ ວົງເດືອນ ໄອໃສ ຫົວໜ້າກົມສ້າງຄູ ກະຊວງສຶກສາທິການ ແລະ ກິລາ ໄດ້ໃຫ້ຮູ້ວ່າ: ການຝຶກອົບຮົມໃນຄັ້ງນີ້, ຈະຊ່ວຍເຮັດໃຫ້ຜູ້ເຮັດວຽກສຶກສານິເທດພາຍໃນສາມາດຊ່ວຍເຫລືອຄູໃນການສອນວິຊາພາສາລາວຂັ້ນ ປ1 ໃຫ້ມີປະສິດທິພາບ, ນຳໃຊ້ວິທີການສອນຫ້ອງຄວບ ແລະ ວາງແຜນການຊ່ວຍເຫລືອຄູໃນສົກຮຽນ 2025-2026. ການຝຶກອົບຮົມປະກອບມີ 10 ພາກທີ່ສຳຄັນ, ເລີ່ມຕົ້ນດ້ວຍການສົ່ງເສີມສຶກສາກ່ຽວກັບວິຊາພາສາລາວຂັ້ນ ປ1, ຮຽນຮູ້ກ່ຽວກັບການຮຽນສຽງ ແລະ ຂຽນຕົວອັກສອນ ຫລື ຄຳເວົ້າໃນພາສາລາວ, ຮຽນຮູ້ກ່ຽວກັບການສອນຫ້ອງຄວບ, ຮຽນຮູ້ວິທີການອອກແບບ, ປະຕິບັດ ແລະ ການຊ່ວຍແນະນຳການສອນບົດຮຽນຫ້ອງຄວບສະເພາະ ໂດຍມີຜູ້ເຮັດ



ວຽກສຶກສານິເທດພາຍໃນຫລາຍກວ່າ 1.126 ຄົນ ຈາກ 30 ເມືອງເປົ້າໝາຍເຂົ້າຮ່ວມຝຶກອົບຮົມຢູ່ຫ້ອງການສຶກສາທິການ ແລະ ກິລາ ເມືອງຂອງເຂົາເຈົ້າ ໂດຍມີວິທະຍາກອນຈາກວິທະຍາໄລຄູ ຫລວງນ້ຳທາ, ຄັງໄຊ ແລະ ສະຫວັນນະເຂດ.

ທ່ານ ນາງ ວາເນັດຊາ ເຣກາທີ ເລຂາເອກ, ສະຖານທູດອົດສະຕຣາລີ ໄດ້ກ່າວວ່າ: ລັດຖະບານອົດສະຕຣາລີ ພູມໃຈທີ່ໄດ້ສະໜັບສະໜູນລະບົບຜູ້ເຮັດວຽກສຶກສານິເທດພາຍໃນ ທີ່ເປັນລະບົບທັນຍຸກສະໄໝຂອງລັດຖະບານລາວ ເຊິ່ງຮັບປະກັນວ່າເຖິງຄູຈະຢູ່ໃນໂຮງຮຽນຫ່າງໄກກໍສາມາດໄດ້ຮັບການຊ່ວຍເຫລືອຢ່າງເປັນປົກກະຕິ ແລະ ມີຄຸນນະພາບສູງ. ລະບົບການຊ່ວຍເຫລືອຄູທີ່ມີປະສິດທິພາບຄືກັບລະບົບຜູ້ເຮັດວຽກສຶກສານິເທດພາຍໃນ ແມ່ນສຳຄັນຫລາຍທີ່ຈະຊ່ວຍໃຫ້ຄູມີແຮງບັນດານໃຈໃນການສອນ.



| 2025-09-01 | Newspaper | Army | Page 6 |
|---|---|---|---|

ໜ້າ 6 — ກອງທັບປະຊາຊົນລ

# ສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ເຮັດວຽກສຶກສານິເທດພາຍໃນ ເພື່ອປັບປຸງຄຸນນະພາບການສອນ



❖ ໃນເດືອນສິງຫາ 2025 ນີ້, ກະຊວງສຶກສາທິການ ແລະ ກິລາ ໂດຍໄດ້ຮັບການສະໜັບສະໜູນຈາກລັດຖະບານອົດສະຕຣາລີ ໂດຍຜ່ານແຜນງານການປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນ ສຳລັບການສຶກສາຂັ້ນພື້ນຖານ ໃນ ສປປ ລາວ (ແຜນງານບີຄວາ) ໄດ້ດຳເນີນການຝຶກອົບຮົມຮອບທີ 6 ໃຫ້ແກ່ຜູ້ເຮັດວຽກສຶກສານິເທດພາຍໃນ ສຳລັບ 30 ເມືອງ ເປົ້າໝາຍຂອງແຜນງານບີຄວາ.

ລະບົບຜູ້ເຮັດວຽກສຶກສານິເທດພາຍໃນ ໄດ້ຖືກສ້າງຂຶ້ນໃນປີ 2023 ເພື່ອຮັບປະກັນວ່າ ຄູສອນຊັ້ນປະຖົມສຶກສາ, ໂດຍສະເພາະຜູ້ທີ່ຢູ່ໃນເຂດຫ່າງໄກ ແລະ ຜູ້ດ້ອຍໂອກາດ ຈະໄດ້ຮັບການຊ່ວຍເຫຼືອຢ່າງເປັນປົກກະຕິ ດ້ານວິຊາການ ແລະ ເປັນລະບົບແບບເພື່ອນ-ຊ່ວຍ-ເພື່ອນ ຕະຫຼອດສົກຮຽນ. ລະບົບນີ້ສ້າງຕັ້ງຂຶ້ນໂດຍ ສສກ ໂດຍໄດ້ຮັບການສະໜັບສະໜູນຈາກລັດຖະບານອົດສະຕຣາລີ, ລະບົບດັ່ງກ່າວໄດ້ໃຫ້ບູລິມະສິດແກ່ຄູສອນທີ່ມີປະສົບການ ແລະ ຜູ້ອຳນວຍການໂຮງຮຽນ ເພື່ອເຮັດໜ້າທີ່ເປັນຄູເຝິກ ແລະ ຜູ້ໃຫ້ຄຳແນະນຳການສອນໃນໂຮງຮຽນ. ຜູ້ເຮັດວຽກສຶກສານິເທດພາຍໃນ ຈະຊ່ວຍໃຫ້ເພື່ອນຮ່ວມງານປັບປຸງການປະຕິບັດການສິດສອນ ໂດຍການນຳພາການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ຜ່ານການໃຫ້ຄຳແນະນຳຢ່າງເປັນປົກກະຕິ, ການສັງເກດການສອນ, ການສອນເປັນຄູ່, ການໃຫ້ຄຳຄິດຄຳເຫັນ ແລະ ການຕິດຕາມການປະຕິບັດຄຳແນະນຳ. ໃນເບື້ອງຕົ້ນລະບົບດັ່ງກ່າວມີຢູ່ 30 ເມືອງເປົ້າໝາຍ ໃນ 7 ແຂວງ ທີ່ໄດ້ຮັບການສະໜັບສະໜູນຈາກແຜນງານບີຄວາ ຄື: ຜົ້ງສາລີ, ຫຼວງນ້ຳທາ, ບໍ່ແກ້ວ, ຫົວພັນ, ຊຽງຂວາງ, ຄຳມ່ວນ ແລະ ສະຫວັນນະເຂດ. ຍ້ອນເຫັນໄດ້ເຖິງຄວາມສຳຄັນ ແລະ ອົງໃສ່ຜົນໄດ້ຮັບຈາກການປະຕິບັດວຽກງານດັ່ງກ່າວ, ສສກ ຈຶ່ງໄດ້ມີແຜນຂະຫຍາຍໄປແຂວງອື່ນໆຕື່ມອີກ.

ທ່ານ ຣສ ນາງ ວົງເດືອນ ໄອໃສ, ຫົວໜ້າກົມສ້າງຄູ ໄດ້ກ່າວວ່າ: "ກອງປະຊຸມ ຜູ້ເຮັດວຽກສຶກສານິເທດພາຍໃນ ຄັ້ງທີ່ 6 ມີ ຄວາມຄືບໜ້າໃນການເຝິກອົບຮົມໃນຄັ້ງກ່ອນ ແລະ ຕອບສະໜອງຄວາມຕ້ອງການຂອງຄູ. ການເຝິກອົບຮົມຈະຊ່ວຍເຮັດໃຫ້ ຜູ້ເຮັດວຽກສຶກສານິເທດພາຍໃນ ສາມາດຊ່ວຍເຫຼືອຄູໃນການສອນວິຊາພາສາລາວຂັ້ນ ປ.1 ໃຫ້ມີປະສິດທິພາບ, ນຳໃຊ້ວິທີການສອນຫ້ອງຄວບ ແລະ ວາງແຜນການຊ່ວຍເຫຼືອຄູໃນສົກຮຽນ 2025–2026. ພວກເຮົາເນັ້ນໃສ່ການຊ່ວຍເຫຼືອຄູ ກໍຍ້ອນວ່າ ຄູທີ່ມີແຮງຈູງໃຈ ແລະ ໄດ້ຮັບການຝຶກອົບຮົມທີ່ດີ ແມ່ນປັດໄຈຫຼັກຂອງຄວາມສຳເລັດໃນການຮຽນຮູ້ຂອງນັກຮຽນ.

| 2025-09-01 | Newspaper | Vientiane Mai | Page 2 |
|---|---|---|---|




# ກະຊວງ ສສກ ແລະ ອົດສະຕຣາລີ ສືບຕໍ່ສະໜັບສະໜູນ ຄູສອນຊັ້ນປະຖົມສຶກສາດ້ານວິທີການສິດສອນ



● ຜູ້ເຮັດວຽກສຶກສານິເທດພາຍໃນຫຼາຍກວ່າ 1000 ຄົນ ໄດ້ເຂົ້າຮ່ວມການຝຶກອົບຮົມພິເສດ ເພື່ອກະກຽມໃຫ້ການສະໜັບສະໜູນ ແລະ ຄຳແນະນຳ ແກ່ຄູສອນຊັ້ນປະຖົມສຶກສາ ໃນເວລາເປີດສົກຮຽນໃໝ່ 2024-2025 ເຊິ່ງກະຊວງສຶກສາທິການ ແລະ ກິລາ (ສສກ) ໂດຍໄດ້ຮັບການສະໜັບສະໜູນຈາກລັດຖະບານອົດສະຕຣາລີ ຜ່ານແຜນງານປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າເຖິງສຳລັບການສຶກສາຂັ້ນພື້ນຖານ ໃນ ສປປ ລາວ (ແຜນງານບີຄວາ) ໄດ້ເປີດຊຸດຝຶກອົບຮົມໃນຫົວຂໍ້ "ຝຶກອົບຮົມວຽກສຶກສານິເທດພາຍໃນ" ເພື່ອໃຫ້ການສະໜັບສະໜູນຄູ ແລະ ຜູ້ອຳນວຍການໂຮງຮຽນໃນເດືອນ ສິງຫາ 2024 ຜ່ານມາ ເຊິ່ງການຝຶກອົບຮົມດັ່ງກ່າວເປັນສ່ວນໜຶ່ງຂອງ ກະຊວງສຶກສາທິການ ແລະ ກິລາ ໃນການລິເລີ່ມຂັບຂະຫຍາຍວຽກງານການພັດທະນາວິຊາຊີບຄູແບບຕໍ່ເນື່ອງໃຫ້ກວ້າງອອກໄປສູ່ທ້ອງຖິ່ນ ເພື່ອແບ່ງຂັ້ນຄຸ້ມຄອງໃນດ້ານການພັດທະນາວິຊາຊີບຄູແບບຕໍ່ເນື່ອງ.

ການຝຶກອົບຮົມດັ່ງກ່າວຜູ້ເຂົ້າຮ່ວມມີໜ້າທີ່ໃຫ້ການສະໜັບສະໜູນການສອນ ການສຶກສານິເທດພາຍໃນ ໃຫ້ແກ່ຄູໃນ 7 ແຂວງເປົ້າໝາຍ ຄື: ( ແຂວງບໍ່ແກ້ວ ຫຼວງນ້ຳທາ ຜົ້ງສາລີ ຫົວພັນ ຊຽງຂວາງ ສະຫວັນນະເຂດ ແລະ ແຂວງຄຳມ່ວນ) ໃນໄລຍະເດືອນສິງຫາ 2024 ຜ່ານມານີ້ ພະນັກງານວິຊາການ 158 ທ່ານ ຈາກວິທະຍາໄລຄູ (ວຄ) ຫຼວງນ້ຳທາ ຄັງໄຊ ແລະ ສະຫວັນນະເຂດ ໄດ້ດຳເນີນການຝຶກອົບຮົມໃຫ້ແກ່ຜູ້ເຮັດວຽກສຶກສານິເທດ ຈຳນວນ 1.121 ຄົນ ເຊິ່ງທີມຜູ້ເຮັດວຽກສຶກສານິເທດພາຍໃນ ໄດ້ຮັບການສ້າງຕັ້ງຂຶ້ນໃນເດືອນ ມີນາ ປີ 2023 ຜ່ານມາ ພວກເຂົາເຈົ້າມີໜ້າໃຫ້ການຊ່ວຍເຫຼືອດ້ານການສອນແກ່ຄູໃນໂຮງຮຽນຂອງຕົນເອງ ແລະ ໂຮງຮຽນໃກ້ຄຽງໃນລະຫວ່າງສົກຮຽນ ໂດຍການລົງຕິດຕາມຢ່າງເປັນປົກກະຕິ ການໂທຫາທາງວີດີໂອ ແລະ ສົ່ງຂໍ້ຄວາມຜ່ານກຸ່ມວັອດແອັບ ພວກເຂົາເຈົ້າຍັງຊ່ວຍອຳນວຍຄວາມສະດວກໃນການຈັດຫຼາຍໆກິດຈະກຳຂອງການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ລວມທັງການສັງເກດການສອນໃນຫ້ອງຮຽນ ການສອນເປັນຄູ່ ແລະ ໃຫ້ແນະນຳໃນການເບິ່ງວິດີໂອສຳລັບການພັດທະນາຄູ.

ທ່ານ ເກດ ພັນລັກ ຫົວໜ້າທີມສ້າງຄູ ໄດ້ກ່າວວ່າ: ຄູມີບົດບາດສຳຄັນໃນການຮຽນທີ່ປະສົບຜົນສຳເລັດ ແລະ ອະນາຄົດຂອງໄວໜຸ່ມ ເຊິ່ງເຂົາເຈົ້າເປັນຜູ້ນຳເອົາຫຼັກສູດຊັ້ນປະຖົມສຶກສາສະບັບປັບປຸງ ໃໝ່ມານຳໃຊ້ໃນຫ້ອງຮຽນຕົວຈິງ ເຖິງຢ່າງໃດກໍຕາມຄູຍັງຕ້ອງການການສະໜັບສະໜູນຢ່າງຕໍ່ເນື່ອງ ເພື່ອປັບຕົວໃຫ້ຄຸ້ນເຄີຍກັບ ການຮຽນ-ການສອນ ຫຼັກສູດຊັ້ນປະຖົມສຶກສາສະບັບປັບປຸງຢ່າງຄົບຖ້ວນ ດ້ວຍເຫດນີ້ ການສະໜັບສະໜູນຂອງລັດຖະບານອົດສະຕຣາລີ ພວກເຮົາຈຶ່ງໄດ້ເນັ້ນໜັກໃສ່ການພັດທະນາວິຊາຊີບຄູໃນໄລຍະທີ 2 ຂອງແຜນງານບີຄວາ ແລະ ໄດ້ສ້າງລະບົບການສະໜັບສະໜູນຄູຕະຫຼອດສົກຮຽນ.

ທ່ານນາງ ວາເນັດຊາ ເລັກກາທີ ເລຂາເອກສະຖານທູດອົດສະຕຣາລີ ໄດ້ກ່າວໃຫ້ຄຳໝັ້ນສັນຍາ ວ່າ: ລັດຖະບານອົດສະຕຣາລີ ເພື່ອໃຫ້ການຊ່ວຍເຫຼືອຂະແໜງການສຶກສາໃນ ສປປ ລາວ ລວມມີ ການສ້າງຄວາມເຂັ້ມແຂງໃຫ້ແກ່ຄູ ດ້ວຍວິທີການການສອນ ແລະ ສື່ການຮຽນ-ການສອນ ແບບໃໝ່ຜ່ານຫຼັກສູດສະບັບປັບປຸງ ຄູແມ່ນໃຈກາງຂອງການຮຽນຮູ້ຂອງນັກຮຽນ ເປົ້າໝາຍຂອງພວກເຮົາແມ່ນເພື່ອສ້າງຄວາມໝັ້ນໃຈ ແລະ ທັກສະຂອງຄູ ໂດຍການຊ່ວຍໃຫ້ເຂົາເຈົ້າເຂົ້າເຖິງການຊ່ວຍເຫຼືອທີ່ມີຄຸນນະພາບສູງ ແລະ ການພັດທະນາວິຊາຊີບຢ່າງເປັນປົກກະຕິ ໂດຍຜ່ານລະບົບຜູ້ເຮັດວຽກສຶກສານິເທດພາຍໃນ ກະຊວງສຶກສາທິການ ແລະ ກິລາ ຮ່ວມກັບລັດຖະບານອົດສະຕຣາລີ ໄດ້ສະໜັບສະໜູນຄູສອນຊັ້ນປະຖົມສຶກສາຫຼາຍກວ່າ 8.000 ຄົນໃນເຂດຫ່າງໄກ ສົ່ງເສີມການຮ່ວມມື ດ້ານນະວັດຕະກຳຊັບສະໄໝ ແລະ ການປັບປຸງການສອນໃນຫ້ອງຮຽນ ຄູຢູ່ໃນເຂດຫ່າງໄກຫຼາຍແຫ່ງໃນປັດຈຸບັນ ສາມາດເຂົ້າເຖິງການຊ່ວຍເຫຼືອດ້ານການພັດທະນາວິຊາຊີບຢ່າງເທົ່າທຽມກັນ ຍ້ອນມີວິທີການຮັບເປັນພື້ນຖານອັນໃໝ່ນີ້.

ການຝຶກອົບຮົມຄັ້ງນີ້ ເປັນຄັ້ງທີ 4 ຂອງການຝຶກອົບຮົມແບບຕໍ່ເນື່ອງ ເຊິ່ງໄດ້ຮັບການອອກແບບມາເພື່ອຜູ້ເຮັດວຽກສຶກສານິເທດພາຍໃນ ຈຸດສຳຄັນຂອງການຝຶກອົບຮົມແມ່ນການນຳໃຊ້ຄູ່ມື ເພື່ອປັບບົດຮຽນສຳລັບຫ້ອງຄວບ ແລະ ຄຳແນະນຳສຳລັບກິດຈະກຳພິເສດສຳລັບນັກຮຽນທີ່ເຮັດກິດຈະກຳແລ້ວໄວ ການຝຶກອົບຮົມຍັງໄດ້ແນະນຳຜູ້ເຂົ້າຮ່ວມໃຫ້ຮູ້ຈັກເຖິງການສອນເປັນຄູ່ ເຊິ່ງເປັນກິດຈະກຳໜຶ່ງຂອງການພັດທະນາວິຊາຊີບຄູແບບຕໍ່ເນື່ອງທີ່ຄູ ແລະ ຜູ້ເຮັດວຽກສຶກສານິເທດພາຍໃນ ໃຫ້ມີການຊຸກຍູ້ຊ່ວຍເຫຼືອຢ່າງເລື້ອຍໆ ໃນລະຫວ່າງການຝຶກອົບຮົມຜູ້ເຂົ້າຮ່ວມໄດ້ຄົ້ນຄິດເຖິງຜົນປະໂຫຍດຂອງການສອນເປັນຄູ່ ແລະ ວິທີການເຮັດວຽກກັບຄູຮ່ວມກັບການສອນຮ່ວມເປັນຄູ່ ພວກເຂົາເຈົ້າຍັງໄດ້ຊົມວິດີໂອສຳລັບການພັດທະນາຄູທີ່ຜະລິດໃນເດືອນມິຖຸນາທີ່ຜ່ານມາ ເພື່ອເບິ່ງຕົວຢ່າງການສອນຕົວຈິງໃນຫ້ອງຮຽນ.

ທ່ານ ເກດ ພັນລັກ ໄດ້ກ່າວເນັ້ນວ່າ: ສຳລັບສົກຮຽນ 2024-2025 ນີ້ ຜູ້ເຮັດວຽກສຶກສານິເທດພາຍໃນ ຈະໃຫ້ການສະໜັບສະໜູນຄູແຕ່ລະເຂດທີ່ພວກເຂົາເຈົ້າຮັບຜິດຊອບ ແລະ ຈະຈັດການຝຶກອົບຮົມດ້ານການສອນເປັນຄູ່ 1 ຄັ້ງຕໍ່ພາກຮຽນ ວິທະຍາໄລຄູ ແລະ ຫ້ອງການສຶກສາທິການ ແລະ ກິລາເມືອງ ຈະສະໜັບສະໜູນ ຜູ້ເຮັດວຽກສຶກສານິເທດພາຍໃນ ໃນການເຮັດໜ້າທີ່ຂອງເຂົາເຈົ້າ ໂດຍສຸມໃສ່ໂຮງຮຽນທີ່ຍັງປະຕິບັດບໍ່ທັນໄດ້ດີ.

ແຜນງານບີຄວາ ແມ່ນແຜນງານທີ່ນຳພາໂດຍລັດຖະບານລາວ ໂດຍການສະໜັບສະໜູນຈາກລັດຖະບານອົດສະຕຣາລີ ແລະ ອົງການພັດທະນາສາກົນຂອງປະເທດສະຫະລັດອາເມຣິກາ (USAID) ແຜນງານໄດ້ສຸມໃສ່ການເສີມຂະຫຍາຍຜົນການຮຽນຂອງຊາວໜຸ່ມຂອງປະເທດ ໂດຍສະເພາະ ແມ່ນຜູ້ທີ່ຕ້ອງການຄວາມຊ່ວຍເຫຼືອ ແລະ ຜູ້ທີ່ດ້ອຍໂອກາດ ແຜນງານບີຄວາ ຍັງຈະສືບຕໍ່ສຸມໃສ່ການຮັບປະກັນຄວາມສະເໝີພາບ ລະຫວ່າງຍິງ-ຊາຍ ແລະ ການສົ່ງເສີມການສຶກສາຮຽນຮ່ວມເຂົ້າໃນທຸກໆກິດຈະກຳ.

ນຳສະເໜີໂດຍ: ແວນຂາວ

| 2025-09-01 | Newspaper | Pasaxon | Page 12 |
|---|---|---|---|



# ສສກ ຈັດຝຶກອົບຮົມໃຫ້ຜູ້ເຮັດວຽກສຶກສານິເທດພາຍໃນ

ກະຊວງສຶກສາທິການ ແລະ ກິລາ (ສສກ) ໄດ້ຮັບການສະໜັບສະໜູນຈາກລັດຖະບານ ອົສຕຣາລີ ໂດຍຜ່ານແຜນງານການປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນ ສຳລັບການສຶກສາຂັ້ນພື້ນຖານໃນ ສປປ ລາວ (ແຜນງານບີຄວາ) ໄດ້ຈັດຝຶກອົບຮົມ ຄັ້ງທີ 6 ໃຫ້ຜູ້ເຮັດວຽກສຶກສານິເທດພາຍໃນ ສຳລັບ 30 ເມືອງເປົ້າໝາຍຂອງແຜນງານບີຄວາ ຂຶ້ນໃນລະຫວ່າງວັນທີ 4 ຫາ 29 ສິງຫາຜ່ານມາ.

ທ່ານ ນາງ ວົງເດືອນ ໄອໃສ ຫົວໜ້າກົມສ້າງຄູ ກ່າວວ່າ: ກອງປະຊຸມຄັ້ງນີ້, ຜູ້ເຮັດວຽກສຶກສານິເທດພາຍໃນ ຄັ້ງທີ 6 ມີຄວາມຄືບໜ້າໃນການຝຶກອົບຮົມໃນຄັ້ງກ່ອນ ແລະ ຕອບສະໜອງຄວາມຕ້ອງການຂອງຄູ. ການຝຶກອົບຮົມຈະຊ່ວຍເຮັດໃຫ້ຜູ້ເຮັດວຽກສຶກສານິເທດພາຍໃນ ສາມາດຊ່ວຍເຫຼືອຄູໃນການສອນວິຊາພາສາລາວຂັ້ນ ປ.1 ໃຫ້ມີປະສິດທິພາບ, ນຳໃຊ້ວິທີການສອນຫ້ອງຄວບ ແລະ ວາງແຜນການຊ່ວຍເຫຼືອຄູໃນສົກຮຽນປີ 2025-2026. ພວກເຮົາເນັ້ນໃສ່ການຊ່ວຍເຫຼືອຄູ ຍ້ອນວ່າຄູທີ່ມີແຮງຈູງໃຈ ແລະ ໄດ້ຮັບການຝຶກອົບຮົມທີ່ດີແມ່ນປັດໄຈຫຼັກຂອງຄວາມສຳເລັດໃນການຮຽນຮູ້ຂອງນັກຮຽນ.

ການຝຶກອົບຮົມຄັ້ງນີ້, ປະກອບມີ 10 ພາກທີ່ສຳຄັນຄື: ການລົງເລິກສຶກສາກ່ຽວກັບວິຊາພາສາລາວຂັ້ນ ປ.1, ຮຽນຮູ້ກ່ຽວກັບຄວາມສຳຄັນຂອງຂັ້ນນຳເຂົ້າສູ່ບົດຮຽນ ແລະ ວິທີການນຳໃຊ້ 7 ຂັ້ນຕອນ ໃໝ່ ສຳລັບການຮຽນສຽງ ແລະ ຂຽນຕົວອັກສອນ ຫຼື ຄຳເວົ້າໃນພາສາລາວ; ການຮຽນຮູ້ກ່ຽວກັບສາມພາກຂອງໂມດູນທີ່ກ່ຽວກັບການສອນຫ້ອງຄວບ ຊຶ່ງຜູ້ເຮັດວຽກສຶກສານິເທດພາຍໃນ ໄດ້ຮຽນຮູ້ວິທີການອອກແບບ, ປະຕິບັດ ແລະ ການຊ່ວຍແນະນຳການສອນບົດຮຽນຫ້ອງຄວບສະເພາະ ຊຶ່ງຫ້ອງຄວບແມ່ນມີໃນຫຼາຍໂຮງຮຽນ ທີ່ຢູ່ຫ່າງໄກຂອງປະເທດລາວ. ໃນນັ້ນ, ຜູ້ເຂົ້າຮ່ວມຈະໄດ້ສືບຕໍ່ເນັ້ນໃສ່ການຮຽນຮູ້ກ່ຽວກັບວິທີການສອນບົດຮຽນຝຶກເວົ້າພາສາລາວ ສະບັບປັບປຸງໃໝ່, ເພື່ອເຮັດໃຫ້ວິທີການສອນຊ່ວຍໃຫ້ນັກຮຽນພັດທະນາທັກສະການສື່ສານ ແລະ ເວົ້າພາສາລາວ. ນອກນັ້ນ, ຍັງໄດ້ແນະນຳເຄື່ອງມືການປະເມີນຕົນເອງຂອງຄູ ແລະ ມາດຕະຖານການສອນຂັ້ນປະຖົມສຶກສາ ທີ່ຜູ້ເຮັດວຽກສຶກສານິເທດພາຍໃນສາມາດນຳໃຊ້ເພື່ອຊ່ວຍຄູລະບຸຄວາມຕ້ອງການການຮຽນຮູ້ ແລະ ສ້າງແຜນພັດທະນາວິຊາຊີບຄູແບບຕໍ່ເນື່ອງຂອງຕົນ; ສະຫຼຸບໂດຍເນັ້ນໃສ່ການສົ່ງເສີມການສຶກສາຮຽນຮ່ວມ ແລະ ມາດຕະຖານທາງສັງຄົມ, ແກ້ໄຂບັນຫາກ່ຽວກັບຄວາມສະເໝີພາບຍິງ-ຊາຍ, ອາຍຸ ແລະ ການຈັດລຳດັບຂັ້ນໜ້າທີ່ ທີ່ເປັນອຸປະສັກໃນການເຂົ້າເຖິງ ການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ແລະ ວິທີການສົ່ງເສີມສະພາບແວດລ້ອມທີ່ສົ່ງເສີມການຮຽນຮ່ວມໃນໂຮງຮຽນ. ຈາກນັ້ນ, ກອງປະຊຸມ ໄດ້ແນະນຳໃຫ້ຜູ້ເຮັດວຽກສຶກສານິເທດພາຍໃນສ້າງແຜນການຊ່ວຍເຫຼືອຄູຂອງພາກຮຽນທີ I ໃຫ້ສອດຄ່ອງກັບຄວາມຕ້ອງການການຮຽນຮູ້ທີ່ຄູໄດ້ກຳນົດ.

ທ່ານ ນາງ ວາເນັດຊາ ເຮັກກາທີ ເລຂາເອກ ສະຖານທູດອົສຕຣາລີ ກ່າວວ່າ: ຄູເປັນໃຈກາງຂອງຄຸນນະພາບການສຶກສາ. ລັດຖະບານອົສຕຣາລີ ພູມໃຈທີ່ໄດ້ສະໜັບສະໜູນລະບົບຜູ້ເຮັດວຽກສຶກສານິເທດພາຍໃນ ທີ່ເປັນລະບົບທັນຍຸກສະໄໝຂອງລັດຖະບານລາວ ຊຶ່ງຮັບປະກັນວ່າເຖິງຄູຈະຢູ່ໃນໂຮງຮຽນຫ່າງໄກກໍສາມາດໄດ້ຮັບການຊ່ວຍເຫຼືອຢ່າງເປັນປົກກະຕິ ແລະ ມີຄຸນນະພາບສູງ. ລະບົບການຊ່ວຍເຫຼືອຄູທີ່ມີປະສິດທິພາບ ຄືກັບລະບົບຜູ້ເຮັດວຽກສຶກສານິເທດພາຍໃນ ແມ່ນສຳຄັນຫຼາຍທີ່ຈະຊ່ວຍໃຫ້ຄູມີແຮງບັນດານໃຈໃນການສອນ.

ປີນີ້, ລະບົບຜູ້ເຮັດວຽກສຶກສານິເທດພາຍໃນ ຈະໄດ້ຮັບການເສີມຂະຫຍາຍຕື່ມດ້ວຍການຝຶກອົບຮົມຜູ້ເຮັດວຽກສຶກສານິເທດພາຍນອກ 141 ຄົນ ຈາກຫ້ອງການສຶກສາທິ



| 2025-09-03 | Newspaper | Public Security | Page 2 |
|---|---|---|---|

# ກະຊວງສຶກສາທິການ ແລະ ກິລາ ຮ່ວມກັບ ລັດຖະບານອົດສະຕຣາລີ ສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ເຮັດວຽກສຶກສານິເທດພາຍໃນ



ໃນລະຫວ່າງວັນທີ 24-29 ສິງຫາ, ກະຊວງສຶກສາທິການ ແລະ ກິລາ ໂດຍໄດ້ຮັບການສະໜັບສະໜູນຈາກລັດຖະບານອົດສະຕຣາລີ ໂດຍຜ່ານແຜນງານການປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນ ສຳລັບການສຶກສາຂັ້ນພື້ນຖານ ໃນ ສປປ ລາວ (ແຜນງານບີຄວາ) ໄດ້ດຳເນີນການຝຶກອົບຮົມ ຄັ້ງທີ 6 ໃຫ້ແກ່ຜູ້ເຮັດວຽກສຶກສານິເທດພາຍໃນ ສຳລັບ 30 ເມືອງເປົ້າໝາຍຂອງແຜນງານບີຄວາ.

ທ່ານ ຣສ. ນາງ ວົງເດືອນ ໂອໃສ ຫົວໜ້າກົມສ້າງຄູ ກະຊວງສຶກສາທິການ ແລະ ກິລາ ກ່າວວ່າ: ກອງປະຊຸມຜູ້ເຮັດວຽກສຶກສານິເທດພາຍໃນ ຄັ້ງທີ 6 ມີຄວາມຄືບໜ້າໃນການຝຶກອົບຮົມໃນຄັ້ງກ່ອນ ແລະ ຕອບສະໜອງຄວາມຕ້ອງການຂອງຄູ. ການຝຶກອົບຮົມຈະຊ່ວຍເຮັດໃຫ້ຜູ້ເຮັດວຽກສຶກສານິເທດພາຍໃນ ສາມາດຊ່ວຍເຫຼືອຄູໃນການສອນວິຊາພາສາລາວ ຂັ້ນ ປ.1 ໃຫ້ມີປະສິດທິພາບ, ນຳໃຊ້ວິທີການສອນຫ້ອງຄວບ ແລະ ວາງແຜນການຊ່ວຍເຫຼືອຄູ ໃນສົກຮຽນ 2025-2026. ພວກເຮົາເນັ້ນໃສ່ການຊ່ວຍເຫຼືອຄູ ກໍຍ້ອນວ່າ ຄູທີ່ມີແຮງຈູງໃຈ ແລະ ໄດ້ຮັບການຝຶກອົບຮົມທີ່ດີ ແມ່ນປັດໄຈຫຼັກຂອງຄວາມສຳເລັດໃນການຮຽນຮູ້ຂອງນັກຮຽນ.

ການຝຶກອົບຮົມ ປະກອບມີ 10 ພາກທີ່ສຳຄັນ ເລີ່ມຕົ້ນດ້ວຍການລົງເລິກສຶກສາກ່ຽວກັບ ວິຊາພາສາລາວ ຂັ້ນ ປ1, ລວມທັງຮຽນຮູ້ກ່ຽວກັບຄວາມສຳຄັນຂອງຂັ້ນນຳເຂົ້າສູ່ບົດຮຽນ ແລະ ວິທີການນຳໃຊ້ 7 ຂັ້ນຕອນໃໝ່ ສຳລັບການຮຽນສຽງ ແລະ ຂຽນຕົວອັກສອນ ຫຼື ຄຳເວົ້າໃນພາສາລາວ. ຕາມດ້ວຍການຮຽນຮູ້ກ່ຽວກັບສາມພາກຂອງໂມດູນທີ່ກ່ຽວກັບການສອນຫ້ອງຄວບ, ເຊິ່ງຜູ້ເຮັດວຽກສຶກສານິເທດພາຍໃນ ຈະຮຽນຮູ້ວິທີການອອກແບບ, ປະຕິບັດ ແລະ ການຊ່ວຍແນະນຳການສອນບົດຮຽນຫ້ອງຄວບສະເພາະ ເຊິ່ງຫ້ອງຄວບແມ່ນມີໃນຫຼາຍໂຮງຮຽນທີ່ຢູ່ຫ່າງໄກຂອງປະເທດລາວ. ຜູ້ເຂົ້າຮ່ວມຈະໄດ້ສືບຕໍ່ເນັ້ນໃສ່ການຮຽນຮູ້ກ່ຽວກັບ ວິທີການສອນບົດຮຽນຝຶກເວົ້າພາສາລາວ ສະບັບປັບປຸງໃໝ່ ເພື່ອສ້າງໃຫ້ວິທີການສອນຊ່ວຍໃຫ້ນັກຮຽນພັດທະນາທັກສະການສື່ສານ ແລະ ເວົ້າພາສາລາວ.

ທ່ານ ນາງ ອາເນັດຊາ ເຣການທີ ເລຂາທິການເອກ ສະຖານທູດອົດສະຕຣາລີ ໄດ້ກ່າວວ່າ: ຄູເປັນໃຈກາງຂອງຄຸນນະພາບການສຶກສາ, ລັດຖະບານອົດສະຕຣາລີ ພູມໃຈທີ່ໄດ້ສະໜັບສະໜູນລະບົບຜູ້ເຮັດວຽກສຶກສານິເທດພາຍໃນທີ່ເປັນລະບົບທັນສະໄໝຂອງລັດຖະບານລາວ, ເຊິ່ງຮັບປະກັນວ່າ ເຖິງຄູຈະຢູ່ໃນໂຮງຮຽນຫ່າງໄກ ກໍສາມາດໄດ້ຮັບການຊ່ວຍເຫຼືອຢ່າງເປັນປົກກະຕິ ແລະ ມີຄຸນນະພາບສູງ. ລະບົບການຊ່ວຍເຫຼືອຄູທີ່ມີປະສິດທິພາບ ຄືກັບລະບົບຜູ້ເຮັດວຽກສຶກສານິເທດພາຍໃນນີ້ ແມ່ນສຳຄັນຫຼາຍທີ່ຈະຊ່ວຍໃຫ້ຄູມີແຮງບັນດານໃຈໃນການສອນ.

| 2025-08-15 | Savannakhet Radio Facebook |
|---|---|

**ວິທະຍຸກະຈາຍສຽງ ແຂວງສະຫວັນນະເຂດ**
August 15 at 1:20 PM ·

ການສ້າງໂຮງຮຽນທີ່ປອດໄພ: ກະຊວງສຶກສາທິການ ແລະ ກິລາ ຮ່ວມກັບລັດຖະບານອົດສະຕຣາລີ ສືບຕໍ່ຮ່ວມມືເພື່ອສ້າງ ຄວາມເຂັ້ມແຂງດ້ານການປົກປ້ອງ ແລະ ຮັກສາຄວາມປອດໄພສຳລັບເດັກໃນຊັ້ນປະຖົມສຶກສາ
--... See more



You, Tik Chandaraphone and 2 others · 1 share

Like · Comment · Share

| 2025-08-25 | Sing distrcit Luang Namtha Radio Facebook |
|---|---|

**ສະຖານີວິທະຍຸກະຈາຍສຽງ ເມືອງສິງ ແຂວງຫຼວງນ້ຳທາ**
August 25 at 2:35 PM ·

ຂ່າວ

ກອງປະຊຸມຝຶກອົບຮົມວຽກງານ CPD ( ການພັດທະນາວິຊາຊີບຄູແບບຕໍ່ເນື່ອງ) ໃຫ້ແກ່ IPS (ຜູ້ເຮັດວຽກສຶກສານິເທດພາຍໃນ)

ພາຍໃຕ້ການເປັນປະທານ ທ່ານ ຄຳຕັນ ສີງດາວເຮືອງ ຮອງຫົວໜ້າຫ້ອງການສຶກສາ ທິການ ແລະ ກິລາ ເມືອງ ຄູຝຶກຈາກ ວິທະຍາໄລຄູ, ວິຊາການຫ້ອງການ ສຶກສາທິການ ແລະ ກິລາເມືອງ ແລະ ຜູ້ເຮັດວຽກສຶກສານິເທດພາຍໃນ(IPS) 57 ທ່ານ ຍິງ 29 ທ່ານ,
ກອງປະຊຸມ ໃນຄັ້ງນີ້ຈະໄດ້ດຳເນີນໄປເປັນເວລາ 5 ວັນເລີ່ມ ແຕ່ 25-29 ສິງຫາ 2025 ທີ່ໂຮງຮຽນ ມສ ເມືອງສິງ, ເຊິ່ງກອງປະຊຸມຈະໄດ້ສຶກສາຄືນກ່ຽວກັບ ຄູ່ມືວິຊາພາສາລາວຊັ້ນປະຖົມປີທີ1, ຫຼັກການ ແລະ ວິທີສອນຫ້ອງຄວບ, ລົງເລິກວິຊາຝຶກເວົ້າພາສາລາວ(SLP), ເຄື່ອງມືປະເມີນຕົນເອງຂອງຄູສອນຊັ້ນປະຖົມ, ການສຶກສາຮຽນຮ່ວມ ແລະ ວາງແຜນຊ່ວຍເຫຼືອຄູໃນ ພາກຮຽນ1 ສົກຮຽນ2025-2026.
ໃຫ້ການສະຫນັບສະຫນູນໂດຍ ລັດທະບານອົດສະຕາລີ ໂດຍຜ່ານແຜນງານບີຄວາ



You, Tik Chandaraphone and 11 others · 1 share

Like · Comment · Share

| 2025-08-26 | Songkhone District Education and Sport Bureau Facebook |
|---|---|


ຫ້ອງການສຶກສາທິການ ແລະ ກິລາເມືອງ ສອງຄອນ
Yesterday at 12:51 PM ·

ພິທີເປີດກອງປະຊຸມຝຶກອົບຮົມກ່ຽວກັບການພັດທະນາວິຊາຊີບແບບຕໍ່ເນື່ອງ ຊຸດທີ 6 ໃຫ້ຜູ້ຮັບຜິດຊອບການສຶກສານິເທດພາຍໃນIPS.
______________________________ ໃນຕອນວັນທີ 25 ສິງຫາ 2025, ຫ້ອງການສຶກສາທິການ ແລະ ກິລາເມືອງສອງຄອນ ເປີດກອງປະຊຸມຝຶກອົບຮົມກ່ຽວກັບການພັດທະນາວິຊາຊີບແບບຕໍ່ເນື່ອງ ຊຸດທີ 6 ໃຫ້ຜູ້ຮັບຜິດຊອບການສຶກສານິເທດພາຍໃນ IPS ທີ່ ສະໂມສອນຫ້ອງການສຶກສາເມືອງ, ໂດຍໄດ້ຮັບກຽດເຂົ້າຮ່ວມເປັນປະທານຂອງ ທ່ານ ສົມໃຈ ພິວລະມຸນ ຮອງຫົວໜ້າຫ້ອງການສຶກສາທິການ ແລະ ກິລາເມືອງ, ມີຄູຝຶກຈາກວິທະຍາໄລຄູສະຫວັນນະເຂດຈຳນວນ 4 ທ່ານ, ຍິງ ບໍ່ຄວາ 1 ທ່ານ. ມີຄູນິເທດພາຍໃນເມືອງ 8 ທ່ານ, ຍິງ 4 ທ່ານ, ມີພະນັກງານຊ່ວຍເຫຼືອ 2 ທ່ານ, ຍິງ 2 ທ່ານ. ມີໂຄງການບໍ່ຄວາ 1 ທ່ານ. ກົມສ້າງຄູ 1ທ່ານ. ຄູມາຈາກ ວຄສ ສາລະວັນ 1ທ່ານ,ຍິງ 1ທ່ານ. ຄູມາຈາກ ວຄສ ປາກເຊ 1ທ່ານ. ມີສຳມະນາກອນຈຳນວນທັງໝົດ 57ທ່ານ,ຍິງ 27 ທ່ານເຂົ້າຮ່ວມ.

ໃນວາລະດຽວກັນນັ້ນ ກໍ່ໄດ້ມີການມອບໃບຊົມເຊີຍໃຫ້ກັບບັນດາສຳມະນາກອນທີ່ໄດ້ມີຜົນງານອັນດີງາມໃນໄລຍະສົກຮຽນ 2024-2025 ຜ່ານມາຢ່າງສົມກຽດ ແລະ ເພື່ອເຮັດໃຫ້ກອງປະຊຸມມີເນື້ອໃນຄວາມໝາຍຄວາມສຳຄັນ ແລະ ໜັກແໜ້ນຂຶ້ນຕື່ມ ທ່ານ ສົມໃຈ ພິວລະມຸນ ຮອງຫົວໜ້າຫ້ອງການສຶກສາທິການ ແລະ ກິລາເມືອງ ກໍ່ໄດ້ຂຶ້ນມີຄຳເຫັນໂອລົມຕໍ່ກອງປະຊຸມ ພ້ອມທັງກ່າວຕ້ອນຮັບບັນດາທ່ານວິທະຍາກອນຄູຝຶກ, ສຳມະນາກອນທຸກໆທ່ານຢ່າງເລິກເຊິ່ງ ແລະ ກ່າວໄຂກອງປະຊຸມຢ່າງເປັນທາງການ.

ວາລະດຳເນີນການກອງປະຊຸມຝຶກອົບຮົມເປັນເວລາ 5 ວັນ ຈະນັບແຕ່ວັນທີ 25-29 ສິງຫາ 2025 ສະຖານທີ່ຝຶກ ທີ່ ໂຮງຮຽນ ມສ ປາກລ່ອງ

#ຂໍຂອບໃຈ.



| 2025-08-26 | Xiengkhouang Radio-Television Facebook and TV |
|---|---|




| 2025-08-27 | Savannakhet Teacher Training College Facebook |
|---|---|


Savannakhet Teacher Training College
13m ·

ກະຊວງສຶກສາທິການ ແລະ ກິລາ ຮ່ວມກັບລັດຖະບານອົດສະຕຣາລີ ໄດ້ສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ຮັບຜິດຊອບການສຶກສານິເທດພາຍໃນ ເພື່ອປັບປຸງຄຸນນະພາບການສອນ.... See more

| 2025-08-27 | Economic and Commerce Facebook |
|---|---|




| 2025-08-27 | Savannakhet Teacher Training College Facebook |
|---|---|



| | |
|---|---|
| 2025-08-27 | Vientiane Radio FM 105.5 Facebook |




| | |
|---|---|
| 2025-08-27 | Edu-Sport Daily News Facebook |



| | |
|---|---|
| 2025-08-27 | Lao National Radio FM 103.7 Facebook |




| | |
|---|---|
| 2025-08-27 | Xiengkhouang Mixay Newspaper Facebook |



| | |
|---|---|
| **2025-08-28** | **Pathedlao Facebook** |

ປະເທດລາວ Pathedlao
August 28 at 11:15 AM ·

ສ້າງຄວາມເຂັ້ມແຂງໃຫ້ຜູ້ເຊັດວຽກສຶກສານິເທດພາຍໃນ

ຂປລ. ໃນລະຫວ່າງວັນທີ 4-29 ສິງຫາ 2025 ນີ້, ກະຊວງສຶກສາທິການ ແລະ ກິລາ ຈັດຝຶກອົບຮົມໃຫ້ແກ່ຜູ້ເຊັດວຽກສຶກສານິເທດພາຍໃນ ສໍາລັບ 30 ເມືອງເປົ້າໝາຍຂອງແຜນງານບີຄວາ ໂດຍໄດ້ຮັບການສະໜັບສະໜູນຈາກລັດຖະບານອົດສະຕຣາລີ ໂດຍຜ່ານແຜນງານການປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າເຖິງການສຶກສາຂັ້ນພື້ນຖານ ໃນ ສປປ ລາວ ຫລື ແຜນງານບີຄວາ.
ລະບົບ ຜູ້ເຊັດວຽກສຶກສານິເທດພາຍໃນ ສ້າງຂຶ້ນໃນປີ 2023 ເພື່ອຮັບປະກັນວ່າ ຄູສອນຊັ້ນປະຖົມສຶກສາ ໂດຍສະເພາະຜູ້ທີ່ຢູ່ເຂດຫ່າງໄກ ແລະ ຜູ້ດ້ອຍໂອກາດ ຈະໄດ້ຮັບການຊ່ວຍເຫລືອຢ່າງເປັນປົກກະຕິ ດ້ານວິຊາການ ແລະ ເປັນລະບົບແບບເພື່ອນຊ່ວຍເພື່ອນ ຕະຫລອດສົກຮຽນ ໂດຍໄດ້ຮັບການສະໜັບສະໜູນຈາກລັດຖະບານອົດສະຕຣາລີ, ໃນເບື້ອງຕົ້ນລະບົບດັ່ງກ່າວມີຢູ່ 30 ເມືອງເປົ້າໝາຍ ໃນ 7 ແຂວງທີ່ໄດ້ຮັບການສະໜັບສະໜູນຈາກ ແຜນງານບີຄວາ ຄື: ແຂວງຜົ້ງສາລີ, ຫລວງນໍ້າທາ, ບໍ່ແກ້ວ, ຫົວພັນ, ຊຽງຂວາງ, ຄໍາມ່ວນ, ແຂວງສະຫວັນນະເຂດ ແລະ ມີແຜນຈະຂະຫຍາຍໄປແຂວງອື່ນໆຕື່ມອີກ.
ທ່ານ ນາງ ວົງເດືອນ ໂອໃສ ຫົວໜ້າກົມສ້າງຄູ ກະຊວງສຶກສາທິການ ແລະ ກິລາ ໄດ້ໃຫ້ຮູ້ວ່າ: ການຝຶກອົບຮົມໃນຄັ້ງນີ້, ຈະຊ່ວຍເຊັດໃຫ້ຜູ້ເຊັດວຽກສຶກສານິເທດພາຍໃນ ສາມາດຊ່ວຍເຫລືອຄູໃນການສອນວິຊາພາສາລາວຂັ້ນ ປ1 ໃຫ້ມີປະສິດທິພາບ, ນໍາໃຊ້ວິທີການສອນຫ້ອງຄວບ ແລະ ວາງແຜນ ການຊ່ວຍເຫລືອຄູໃນສົກຮຽນ 2025-2026. ການຝຶກອົບຮົມປະກອບມີ 10 ພາກທີ່ສໍາຄັນ, ເລີ່ມຕົ້ນດ້ວຍການລົງເລິກສຶກສາກ່ຽວກັບວິຊາພາສາລາວຂັ້ນ ປ1, ຮຽນຮູ້ກ່ຽວກັບການຮຽນສຽງ ແລະ ຂຽນຕົວ ອັກສອນ ຫລື ຄໍາເວົ້າໃນພາສາລາວ, ຮຽນຮູ້ກ່ຽວກັບການສອນຫ້ອງຄວບ, ຮຽນຮູ້ວິທີການອອກແບບ, ປະຕິບັດ ແລະ ການຊ່ວຍແນະນໍາການສອນບົດຮຽນຫ້ອງຄວບສະເພາະ ໂດຍມີຜູ້ເຊັດວຽກສຶກສານິເທດພາຍໃນ ຫລາຍກວ່າ 1.126 ຄົນ ຈາກ 30 ເມືອງເປົ້າໝາຍ ເຂົ້າຮ່ວມຝຶກອົບຮົມ ຢູ່ຫ້ອງການສຶກສາທິການ ແລະ ກິລາເມືອງ ຂອງເຂົາເຈົ້າ ໂດຍມີວິທະຍາກອນ ຈາກວິທະຍາໄລຄູ ຫລວງນໍ້າທາ, ຄັງໄຂ ແລະ ສະຫວັນນະເຂດ.
ທ່ານ ນາງ ວາເນັດຊາ ເຮກາທີ ເລຂາເອກ, ສະຖານທູດອົດສະຕຣາລີ ໄດ້ກ່າວວ່າ: ລັດຖະບານອົດສະຕຣາລີ ພູມໃຈທີ່ໄດ້ສະໜັບສະໜູນລະບົບຜູ້ເຊັດວຽກສຶກສານິເທດພາຍໃນ ທີ່ເປັນລະບົບທັນສະໄໝຂອງລັດຖະບານລາວ ເຊິ່ງຮັບປະກັນວ່າເຖິງຄູຈະຢູ່ໃນໂຮງຮຽນຫ່າງໄກ ກໍສາມາດໄດ້ຮັບການຊ່ວຍເຫລືອຢ່າງເປັນປົກກະຕິ ແລະ ມີຄຸນນະພາບສູງ. ລະບົບການຊ່ວຍເຫລືອຄູທີ່ມີປະສິດທິ ພາບ ຄືກັບລະບົບຜູ້ເຊັດວຽກສຶກສານິເທດພາຍໃນ ແມ່ນສໍາຄັນຫລາຍທີ່ຈະຊ່ວຍໃຫ້ຄູມີແຮງບັນດານໃຈໃນການສອນ.



You and 5 others

Like · Comment · Share

| | |
|---|---|
| **2025-08-28** | **Edu – Sport TV Online Facebook** |

Edu-Sport TV online
August 28 at 3:43 PM ·

ກະຊວງສຶກສາທິການ ແລະ ກິລາ ຮ່ວມກັບລັດຖະບານອົດສະຕຣາລີ ສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ເຊັດວຽກສຶກສານິເທດພາຍໃນ ເພື່ອປັບປຸງຄຸນນະພາບການສອນ
-------------------------------------------... See more





You, Tik Chandaraphone and 80 others · 5 shares

Like · Comment · Share

| 2025-08-28 | Information Media Centre Facebook |
|---|---|




| 2025-08-28 | Luang Namtha News Facebook |
|---|---|



| 2025-08-28 | Kangkhay Teacher Training College Facebook |
|---|---|




**ວິທະຍາໄລຄູ ຄັງໄຂ** is with **Thian Phouphonthong** and **Soutchanthong Chanthavong**.
August 28 at 1:41 PM ·

ໃນລະຫວ່າງວັນທີ 25 ຫາ 29 ສິງຫາ 2025 ນີ້, ກະຊວງສຶກສາທິການ ແລະ ກິລາ ໂດຍໄດ້ຮັບການສະໜັບສະໜູນຈາກ ລັດຖະບານອົດສະຕຣາລີ ໂດຍຜ່ານແຜນງານການປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນ ສໍາລັ... **See more**

| 2025-08-28 | Lao Security News Facebook |
|---|---|



**ຄວາມສະຫງົບ Lao Security News**
August 28 at 10:56 AM ·

ກະຊວງສຶກສາທິການ ແລະ ກິລາ ຮ່ວມກັບລັດຖະບານອົດສະຕຣາລີ ສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ເຮັດວຽກສຶກສານິເທດພາຍໃນ
====================... **See more**

| 2025-08-28 | Savanhphathana News Facebook |
|---|---|

**ສະຫວັນພັດທະນາ ຂ່າວ / Savanhphathana News**
August 28 at 10:44 AM ·

ເຝິກອົບຮົມວຽກງານພັດທະນາວິຊາຊີບຄູແບບຕໍ່ເນື່ອງ ໃຫ້ແກ່ຜູ້ເຮັດວຽກສຶກສານິເທດຄັ້ງທີ 6
************************************************************
ໃນລະຫວ່າງວັນທີ 25-29 ສິງຫາ 2025, ກະຊວງສຶກສາ ທິການ ແລະກິລາແຫ່ງ ສປປ ລາວ (ສສກ) ເຊິ່ງໄດ້ຮັບການສະໜັບສະໜູນຈາກລັດຖະບານ ອົດສະຕຣາລີ ໂດຍຜ່ານແຜນ ງານການຄຸນະພາບ ແລະຂະ ຫຍາຍໂອກາດເຂົ້າຮຽນສໍາລັບການສຶກສາຂັ້ນພື້ນຖານໃນ ສປປ ລາວ (ແຜນງານບີຄວາ) ໄດ້ດໍາເນີນການຝຶກອົບຮົມຮອບ ທີ 6 ໃຫ້ແກ່ຜູ້ເຮັດວຽກສຶກ ສານິເທດ ພາຍໃນ ໄດ້ຈັດກອງປະ ຊຸມເຝິກອົບຮົມວຽກງານພັດ ທະນາວິຊາຊີບຄູແບບຕໍ່ເນື່ອງ ໃຫ້ແກ່ຜູ້ເຮັດວຽກສຶກສານິເທດ ພາຍໃນຄັ້ງທີ 6 ສໍາລັບຊັ້ນປະ ຖົມສຶກສາ ພາຍໃຕ້ການສະໜັບ ສະໜູນຂອງໂຄງການບີຄວາໄລ ຍະ 2, ຢູ່ທີ່ ມປາຍ ແກ້ງກອກພາຍ ໃຕ້ການເປັນປະທານຂອງທ່ານ ສີປະເສີດ ໄຊຍະລີນ ຫົວໜ້າ ຫ້ອງການສຶກສາທິການ ແລະ ກິລາເມືອງຈໍາພອນ, ມີວິທະຍາ ກອນມາຈາກວິທະຍາໄລສ້າງ ຄູສະຫວັນນະເຂດຈໍານວນ 4 ທ່ານ, ຫົວໜ້າໜ່ວຍງານຈັດ ຕັ້ງ-ພະນັກງານ, ໜ່ວຍງານພັດ ທະນາຄູ ແລະໜ່ວຍງານການ ສຶກສາກ່ອນໄວຮຽນ, ສາມັນ ແລະ ວິທະຍາສາດ, ທີມງານ ວິຊາການຂັ້ນເມືອງ ແລະບັນດາ ທ່ານຜູ້ເຮັດວຽກສຶກສານິເທດ ພາຍໃນ ຈໍານວນ 54 ທ່ານເຂົ້າຮ່ວມ.
ກອງປະຊຸມດັ່ງກ່າວໄດ້ຝຶກ ຄື: ຝຶກອົບຮົມວິຊາພາສາລາວ ຂັ້ນ ປ1, ຝຶກການສອນຫ້ອງ ຄວບ (ສ່ວນທີ1), ຝຶກການສອນຫ້ອງຄວບ (ສ່ວນທີ 2), ການສອນຫ້ອງຄວບ (ສ່ວນ ທີ 3), ການສະທ້ອນຄືນການ ຈັດຕັ້ງປະຕິບັດ SLP (ສ່ວນທີ 1), ການສອນສາທິດການຝຶກ ເວົ້າພາສາລາວ SLP (ສ່ວນທີ 2), ເຄື່ອງມືການປະເມີນຕົນ ເອງຂອງຄູ (ສ່ວນທີ1), ເຄື່ອງ ມືປະເມີນຕົນເອງຂອງຄູ (ສອນ ທີ 2), ການສຶກສາຮຽນຮ່ວມ ແລະບັນທັດຖານທາງສັງຄົມ, ການວາງແຜນສໍາລັບພາກຮຽນ ທີ 1 ສົກຮຽນ 2025-2026, ນອກນີ້ ຍັງໄດ້ມີການປະເມີນ ກ່ອນຝຶກ ແລະປະເມີນຫຼັງຝຶກ ອົບຮົມ, ພາຍຫຼັງສໍາເລັດກອງ ປະຊຸມກໍ່ຍັງມີການມອບໃບຍັ້ງ ຢືນໃຫ້ແກ່ຄູສໍາມະນາກອນທີ່ ເຂົ້າຮ່ວມຈໍານວນ 54 ທ່ານ.
ເຊິ່ງລະບົບຜູ້ເຮັດວຽກສຶກ ສານິເທດພາຍໃນໄດ້ຖືກສ້າງ ຂື້ນໃນປີ 2023 ເພື່ອຮັບປະ ກັນວ່າ ຄູສອນຊັ້ນປະຖົມສຶກສາ, ໂດຍສະເພາະຜູ້ທີ່ຢູ່ໃນເຂດຫ່າງ ໄກ ແລະຜູ້ດ້ອຍໂອກາດຈະໄດ້ ຮັບການຊ່ວຍເຫຼືອຢ່າງເປັນປົກ ກະຕິດ້ານວິຊາການ ແລະເປັນ ລະບົບແບບເພື່ອນ-ຊ່ວຍ-ເພື່ອນ ຕະຫຼອດສົກຮຽນ. ລະບົບນີ້ສ້າງ ຕັ້ງຂຶ້ນໂດຍ ສສກ ໂດຍໄດ້ຮັບ ການສະໜັບສະໜູນຈາກລັດ ຖະບານອົດສະຕຣາລີ, ລະບົບ ດັ່ງກ່າວໄດ້ໃຫ້ບູລິມະສິດແກ່ຄູ ສອນທີ່ມີປະສົບການ ແລະຜູ້ອໍານວຍການໂຮງຮຽນ ເພື່ອເຮັດ ໜ້າທີ່ເປັນຄູຝຶກ ແລະຜູ້ໃຫ້ຄໍາ ແນະນໍາການສອນໃນໂຮງຮຽນ. ຜູ້ເຮັດວຽກສຶກສານິເທດພາຍ ໃນ ຈະຊ່ວຍໃຫ້ເພື່ອນຮ່ວມງານ ປັບປຸງການປະຕິບັດການສິດ ສອນຂອງເຂົາເຈົ້າ ໂດຍການ ນໍາພາການພັດທະນາວິຊາຊີບຄູ ແບບຕໍ່ເນື່ອງຜ່ານການໃຫ້ຄໍາ ແນະນໍາຢ່າງເປັນປົກກະຕິ, ການ ສັງເກດການສອນ, ການສອນ ເປັນຄູ່, ການໃຫ້ຄໍາຄຶດຄໍາເຫັນ ແລະການຕິດຕາມການປະຕິບັດ ຄໍາແນະນໍາ. ໃນເບື້ອງຕົ້ນລະບົບ ດັ່ງກ່າວມີຢູ່ 30 ເມືອງເປົ້າໝາຍ ໃນ 7 ແຂວງທີ່ໄດ້ຮັບການສະໜັບ ສະໜູນ ຈາກແຜນງານບີຄວາຄື: ຜົ້ງສາລີ, ຫຼວງນໍ້າທາ, ບໍ່ແກ້ວ, ຫົວພັນ, ຊຽງຂວາງ, ຄໍາມ່ວນ ແລະສະຫວັນນະເຂດ./.



| 2025-08-28 | Laos News KPL Facebook |
|---|---|

**ຂ່າວ Laos News - KPL**
August 28 at 4:02 PM ·

MoES and Australia Strengthen Internal Pedagogical Support to Improve Teaching Quality

(KPL) From 4-29 August, the Ministry of Education and Sports (MoES), with support from the Australian Government through the Basic Education Quality and Access in Laos (BEQUAL) program, is conducting a sixth round of training for Internal Pedagogical Support (IPS) staff in BEQUAL's 30 target districts.

https://kpl.gov.la/En/detail.aspx?id=94369



| 2025-08-29 | Lao People’s Army News Facebook |
|---|---|



Lao people's Army News
August 29 at 12:23 PM ·

ສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ເຮັດວຽກສຶກສານິເທດພາຍໃນ ເພື່ອປັບປຸງຄຸນນະພາບການສອນ
https://kongthap.gov.la/?lang=lo&at=at&hide=none&page=48...

ໃນເດືອນສິງຫາ 2025 ນີ້, ກະຊວງສຶກສາທິການ ແລະ ກິລາ (ສສກ) ໂດຍໄດ້ຮັບການສະໜັບສະໜູນຈາກລັດຖະບານອົດສະຕຣາລີ ໂດຍຜ່ານແຜນງານການປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນ ສໍາລັບການສຶກສາຂັ້ນພື້ນຖານໃນ ສປປ ລາວ (ແຜນງານບີຄວາ) ໄດ້ດໍາເນີນການເຝິກອົບຮົມ ຮອບທີ 6 ໃຫ້ແກ່ຜູ້ເຮັດວຽກສຶກສານິເທດພາຍໃນສໍາລັບ 30 ເມືອງ ເປົ້າໝາຍ ຂອງແຜນງານບີຄວາ.

ລະບົບ ຜູ້ເຮັດວຽກສຶກສານິເທດພາຍໃນ ໄດ້ຖືກສ້າງຂຶ້ນໃນປີ 2023 ເພື່ອຮັບປະກັນວ່າ ຄູສອນຊັ້ນປະຖົມສຶກສາ ໂດຍສະເພາະຜູ້ທີ່ຢູ່ໃນເຂດຫ່າງໄກ ແລະ ຜູ້ດ້ອຍໂອກາດ ຈະໄດ້ຮັບການຊ່ວຍເຫຼືອຢ່າງເປັນປົກກະຕິ ດ້ານວິຊາການ ແລະ ເປັນລະບົບແບບເພື່ອນ-ຊ່ວຍ-ເພື່ອນ ຕະຫຼອດສົກຮຽນ. ລະບົບນີ້: ສ້າງຕັ້ງຂຶ້ນໂດຍ ກະຊວງ ສສກ ໂດຍໄດ້ຮັບການສະໜັບສະໜູນຈາກລັດຖະບານອົດສະຕຣາລີ, ລະບົບດັ່ງກ່າວໄດ້ໃຫ້ບູລິມະສິດແກ່ຄູສອນທີ່ມີປະສົບການ ແລະ ຜູ້ອໍານວຍການໂຮງຮຽນ ເພື່ອເຮັດໜ້າທີ່ເປັນຄູເຝິກ ແລະ ຜູ້ໃຫ້ຄໍາແນະນໍາການສອນໃນໂຮງຮຽນ. ຜູ້ເຮັດວຽກສຶກສານິເທດພາຍໃນ ຈະຊ່ວຍໃຫ້ເພື່ອນຮ່ວມງານປັບປຸງການປະຕິບັດການສິດສອນ ໂດຍການນໍາພາການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ຜ່ານການໃຫ້ຄໍາແນະນໍາຢ່າງເປັນປົກກະຕິ, ການສັງເກດການສອນ, ການສອນເປັນຄູ່, ການໃຫ້ຄໍາຕິດຄໍາເຫັນ ແລະ ການຕິດຕາມການປະຕິບັດຄໍາແນະນໍາ. ໃນເບື້ອງຕົ້ນລະບົບດັ່ງກ່າວມີຢູ່ 30 ເມືອງເປົ້າໝາຍ ໃນ 7 ແຂວງທີ່ໄດ້ຮັບການສະໜັບສະໜູນຈາກແຜນງານບີຄວາ ຄື: ແຂວງຜົ້ງສາລີ, ຫຼວງນໍ້າທາ, ບໍ່ແກ້ວ, ຫົວພັນ, ຊຽງຂວາງ, ຄໍາມ່ວນ ແລະ ແຂວງສະຫວັນນະເຂດ. ຍ້ອນເຫັນໄດ້ເຖິງຄວາມສໍາຄັນ ແລະ ອີງໃສ່ຜົນໄດ້ຮັບຈາກການປະຕິບັດວຽກງານດັ່ງກ່າວ, ກະຊວງ ສສກ ຈຶ່ງໄດ້ມີແຜນຂະຫຍາຍໄປແຂວງອື່ນໆ ຕື່ມອີກ.

ທ່ານ ຮສ ນາງ ວົງເດືອນ ໂອໃສ ຫົວໜ້າກົມສ້າງຄູ ກະຊວງ ສສກ ໄດ້ກ່າວວ່າ: “ກອງປະຊຸມ ຜູ້ເຮັດວຽກສຶກສານິເທດພາຍໃນ ຄັ້ງທີ 6 ມີ ຄວາມຄືບໜ້າໃນການເຝິກອົບຮົມໃນຄັ້ງກ່ອນ ແລະ ຕອບສະໜອງຄວາມຕ້ອງການຂອງຄູ. ການເຝິກອົບຮົມຈະຊ່ວຍເຮັດໃຫ້ ຜູ້ເຮັດວຽກສຶກສານິເທດພາຍໃນ ສາມາດຊ່ວຍເຫຼືອຄູໃນການສອນວິຊາພາສາລາວ ຂັ້ນ ປ.1 ໃຫ້ມີປະສິດທິພາບ, ນໍາໃຊ້ວິທີການສອນຫ້ອງຄວບ ແລະ ວາງແຜນການຊ່ວຍເຫຼືອຄູໃນສົກຮຽນ 2025–2026. ພວກເຮົາເນັ້ນໃສ່ການຊ່ວຍເຫຼືອຄູ ກໍຍ້ອນວ່າ ຄູທີ່ມີແຮງຈູງໃຈ ແລະ ໄດ້ຮັບການຝຶກອົບຮົມທີ່ດີ ແມ່ນປັດໃຈຫຼັກ ຂອງຄວາມສໍາເລັດໃນການຮຽນຮູ້ຂອງນັກຮຽນ.

” ທ່ານ ນາງ ວາເນັດຊາ ເຮກາທີ ເລຂາທີເອກ, ສະຖານທູດອົດສະຕຣາລີ ໄດ້ກ່າວວ່າ: “ຄູເປັນໃຈກາງ ຂອງຄຸນນະພາບການສຶກສາ. ລັດຖະບານອົດສະຕຣາລີ ພູມໃຈທີ່ໄດ້ສະໜັບສະໜູນລະບົບຜູ້ເຮັດວຽກສຶກສານິເທດພາຍໃນ ທີ່ເປັນລະບົບທັນສະໄໝຂອງລັດຖະບານລາວ, ເຊິ່ງຮັບປະກັນວ່າ ເຖິງຄູຈະຢູ່ໃນໂຮງຮຽນຫ່າງໄກ ກໍສາມາດໄດ້ຮັບການຊ່ວຍເຫຼືອຢ່າງເປັນປົກກະຕິ ແລະ ມີຄຸນນະພາບສູງ. ລະບົບການຊ່ວຍເຫຼືອຄູທີ່ມີປະສິດທິພາບ ຄືກັບລະບົບຜູ້ເຮັດວຽກສຶກສານິເທດພາຍໃນນີ້ ແມ່ນສໍາຄັນຫລາຍທີ່ຈະຊ່ວຍໃຫ້ຄູມີແຮງບັນດານໃຈໃນການສອນ.”



| 2025-08-29 | Luang Namtha Television Facebook and TV |
|---|---|



| 2025-08-29 | TVsavannakhet Facebook and TV |
|---|---|




| 2025-08-30 | Lao National Radio FM 103.7 Facebook |
|---|---|



ສຶກສາ

# ກະຊວງສຶກສາທິການ ແລະ ກິລາ ຮ່ວມກັບ ລັດຖະບານອົດສະຕຣາລີ ໄດ້ສ້າງຄວາມເຂັ້ມແຂງ ໃຫ້ແກ່ຜູ້ເຮັດວຽກສຶກສານິເທດພາຍໃນ ເພື່ອ ປັບປຸງຄຸນນະພາບການສອນ

By lar sone - August 27, 2025 8 0



ໃນລະຫວ່າງວັນທີ 04 ຫາ 29 ສິງຫາ ນີ້, ກະຊວງສຶກສາທິການ ແລະ ກິລາ ໂດຍໄດ້ຮັບການສະໜັບສະໜູນຈາກລັດຖະບານອົດສະຕຣາລີ ໂດຍຜ່ານແຜນງານການປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນ ສໍາລັບການສຶກສາຂັ້ນພື້ນຖານ ໃນ ສປປ ລາວ (ແຜນງານບີຄວາ) ໄດ້ດໍາເນີນການຝຶກອົບຮົມຮອບທີ 6 ໃຫ້ແກ່ຜູ້ເຮັດວຽກສຶກສານິເທດພາຍໃນສໍາລັບ 30 ເມືອງ ເປົ້າໝາຍຂອງແຜນງານບີຄວາ.

ລະບົບ ຜູ້ເຮັດວຽກສຶກສານິເທດພາຍໃນ ໄດ້ຖືກສ້າງຂຶ້ນໃນປີ 2023 ເພື່ອຮັບປະກັນວ່າ ຄູສອນຊັ້ນປະຖົມສຶກສາ, ໂດຍສະເພາະຜູ້ທີ່ຢູ່ໃນເຂດຫ່າງໄກ ແລະ ຜູ້ດ້ອຍໂອກາດ ຈະໄດ້ຮັບການຊ່ວຍເຫຼືອຢ່າງເປັນປົກກະຕິ ດ້ານວິຊາການ ແລະ ເປັນລະບົບແບບເພື່ອນ-ຊ່ວຍ-ເພື່ອນ ຕະຫຼອດສົກຮຽນ. ລະບົບນີ້ສ້າງຕັ້ງຂຶ້ນໂດຍ ສສກ ໂດຍໄດ້ຮັບການສະໜັບສະໜູນຈາກລັດຖະບານອົດສະຕຣາລີ, ລະບົບດັ່ງກ່າວໄດ້ໃຫ້ບູລິມະສິດແກ່ຄູສອນທີ່ມີປະສົບການ ແລະ ຜູ້ອໍານວຍການໂຮງຮຽນ ເພື່ອເຮັດໜ້າທີ່ເປັນຄູຝຶກ ແລະ ຜູ້ໃຫ້ຄໍາແນະນໍາການສອນໃນໂຮງຮຽນ. ຜູ້ເຮັດວຽກສຶກສານິເທດພາຍໃນ ຈະຊ່ວຍໃຫ້ເພື່ອນຮ່ວມງານປັບປຸງການປະຕິບັດການສິດສອນຂອງເຂົາເຈົ້າໂດຍການນໍາພາການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ຜ່ານການໃຫ້ຄໍາແນະນໍາຢ່າງເປັນປົກກະຕິ, ການສັງເກດການສອນ, ການສອນເປັນຄູ່, ການໃຫ້ຄໍາຄິດຄໍາເຫັນ ແລະ ການຕິດຕາມການປະຕິບັດຄໍາແນະນໍາ. ໃນເບື້ອງຕົ້ນລະບົບດັ່ງກ່າວມີຢູ່ 30 ເມືອງເປົ້າໝາຍ ໃນ 7 ແຂວງທີ່ໄດ້ຮັບການສະໜັບສະໜູນຈາກແຜນງານບີຄວາ ຄື: ຜົ້ງສາລີ, ຫຼວງນໍ້າທາ, ບໍ່ແກ້ວ, ຫົວພັນ, ຊຽງຂວາງ, ຄໍາມ່ວນ ແລະ ສະຫວັນນະເຂດ. ຍ້ອນເຫັນໄດ້ເຖິງຄວາມສໍາຄັນ ແລະ ອີງໃສຜົນໄດ້ຮັບຈາກການປະຕິບັດວຽກງານດັ່ງກ່າວ, ສສກ ຈຶ່ງໄດ້ມີແຜນຂະຫຍາຍໄປແຂວງອື່ນໆຕື່ມອີກ.

ຜູ້ເຮັດວຽກສຶກສານິເທດພາຍໃນ ຫຼາຍກວ່າ 1.126 ຄົນ (ໃນນັ້ນ ເພດຍິງ 53% ແລະ 47% ເປັນຄົນຊົນເຜົ່າ) ເປັນຄູສອນທີ່ມີປະສົບການ ແລະ ເປັນຜູ້ອໍານວຍການທີ່ໄດ້ຮັບການຄັດເລືອກ ທີ່ມີຄວາມມຸ່ງໝັ້ນໃນການຊ່ວຍເຫຼືອຄູດ້ວຍກັນ, ໄດ້ເຂົ້າຮ່ວມການຝຶກອົບຮົມຢູ່ຫ້ອງການສຶກສາທິການ ແລະ ກິລາເມືອງ (ສກມ) ຂອງເຂົາເຈົ້າ. ການຝຶກອົບຮົມແມ່ນໄດ້ຮັບການບັນຍາຍຈາກ ວິຊາການ 100 ກວ່າຄົນຈາກວິທະຍາໄລຄູ (ວຄ) ຫຼວງນໍ້າທາ, ຄັງໄຊ ແລະ ສະຫວັນນະເຂດ, ໂດຍມີ ສກມ 30 ເມືອງເປົ້າໝາຍ ອໍານວຍຄວາມສະດວກດ້ານສະຖານທີ່ ແລະ ອຸປະກອນການຝຶກອົບຮົມ.

ທ່ານ ຣສ. ນາງ ວົງເດືອນ ໂອໄສ, ຫົວໜ້າກົມສ້າງຄູ ໄດ້ກ່າວວ່າ: "ກອງປະຊຸມ ຜູ້ເຮັດວຽກສຶກສານິເທດພາຍໃນ ຄັ້ງທີ່ 6 ມີ ຄວາມຄືບໜ້າໃນການຝຶກອົບຮົມໃນຄັ້ງກ່ອນ ແລະ ຕອບສະໜອງຄວາມຕ້ອງການຂອງຄູ. ການຝຶກອົບຮົມຈະຊ່ວຍເຮັດໃຫ້ ຜູ້ເຮັດວຽກສຶກສານິເທດພາຍໃນສາມາດຊ່ວຍເຫຼືອຄູໃນການສອນວິຊາພາສາລາວຂັ້ນ ປ.1 ໃຫ້ມີປະສິດທິພາບ, ນໍາໃຊ້ວິທີການສອນຫ້ອງຄວບ ແລະ ວາງແຜນການຊ່ວຍເຫຼືອຄູໃນສົກຮຽນ 2025–2026. ພວກເຮົາເນັ້ນໃສ່ການຊ່ວຍເຫຼືອຄູ ກໍຍ້ອນວ່າ ຄູທີ່ມີແຮງຈູງໃຈ ແລະ ໄດ້ຮັບການຝຶກອົບຮົມທີ່ດີ ແມ່ນປັດໃຈຫຼັກຂອງຄວາມສໍາເລັດໃນການຮຽນຮູ້ຂອງນັກຮຽນ."

ການຝຶກອົບຮົມປະກອບມີ 10 ພາກທີ່ສໍາຄັນໃນໄລຍະເວລາ 5 ມື້. ເລີ່ມຕົ້ນດ້ວຍການລົງເລິກສຶກສາກ່ຽວກັບວິຊາພາສາລາວຂັ້ນ ປ. 1, ລວມທັງຮຽນຮູ້ກ່ຽວກັບຄວາມສໍາຄັນຂອງຂັ້ນນໍາເຂົ້າສູ່ບົດຮຽນ ແລະ ວິທີການນໍາໃຊ້ 7 ຂັ້ນຕອນໃໝ່ສໍາລັບການຮຽນສຽງ ແລະ ຂຽນ ຕົວອັກສອນ ຫຼື ຄໍາເວົ້າໃນພາສາລາວ. ຕາມດ້ວຍການຮຽນຮູ້ກ່ຽວກັບສາມພາກຂອງໂມດູນທີ່ກ່ຽວກັບການສອນຫ້ອງຄວບ, ເຊິ່ງ ຜູ້ເຮັດວຽກສຶກສານິເທດພາຍໃນ ຈະຮຽນຮູ້ວິທີການອອກແບບ, ປະຕິບັດ ແລະ ການຊ່ວຍແນະນໍາການສອນບົດຮຽນຫ້ອງຄວບສະເພາະ ເຊິ່ງຫ້ອງຄວບແມ່ນມີໃນຫຼາຍໂຮງຮຽນທີ່ຢູ່ຫ່າງໄກຂອງປະເທດລາວ.

ຜູ້ເຂົ້າຮ່ວມຈະໄດ້ສືບຕໍ່ເນັ້ນໃສ່ການຮຽນຮູ້ກ່ຽວກັບ ວິທີການສອນບົດຮຽນຝຶກເວົ້າພາສາລາວ ສະບັບປັບປຸງໃໝ່, ເພື່ອສ້າງໃຫ້ວິທີການສອນຊ່ວຍໃຫ້ນັກຮຽນພັດທະນາທັກສະການສື່ສານ ແລະ ເວົ້າພາສາລາວ.

ກອງປະຊຸມຍັງໄດ້ແນະນໍາເຄື່ອງມືການປະເມີນຕົນເອງຂອງຄູ ແລະ ມາດຕະຖານການສອນຊັ້ນປະຖົມສຶກສາ ທີ່ຜູ້ເຮັດວຽກສຶກສານິເທດພາຍໃນ ສາມາດນໍາໃຊ້ເພື່ອຊ່ວຍຄູລະບຸຄວາມຕ້ອງການການຮຽນຮູ້ ແລະ ສ້າງແຜນພັດທະນາວິຊາຊີບຄູແບບຕໍ່ເນື່ອງຂອງຕົນ. ກອງປະຊຸມດັ່ງກ່າວໄດ້ສະຫຼຸບໂດຍເນັ້ນໃສ່ການສົ່ງເສີມການສຶກສາຮຽນຮ່ວມ ແລະ ມາດຕະຖານທາງສັງຄົມ, ແກ້ໄຂບັນຫາກ່ຽວກັບຄວາມສະເໝີພາບຍິງ-ຊາຍ, ອາຍຸ ແລະ ການຈັດລໍາດັບຂັ້ນໜ້າທີ່ ທີ່ເປັນອຸປະສັກໃນການເຂົ້າເຖິງ ການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ແລະ ວິທີການສົ່ງເສີມສະພາບແວດລ້ອມທີ່ສົ່ງເສີມການຮຽນຮ່ວມໃນໂຮງຮຽນ. ວາລະສຸດທ້າຍຂອງກອງປະຊຸມໄດ້ແນະນໍາໃຫ້ຜູ້ເຮັດວຽກສຶກສານິເທດພາຍໃນ ສ້າງແຜນການຊ່ວຍເຫຼືອຄູຂອງພາກຮຽນທີ I ໃຫ້ສອດຄ່ອງກັບຄວາມຕ້ອງການການຮຽນຮູ້ທີ່ຄູໄດ້ກໍານົດ.

ທ່ານ ນາງ ວາເນັດຊາ ເຣກາທີ, ເລຂາທີເອກ, ສະຖານທູດອົດສະຕຣາລີ ໄດ້ກ່າວວ່າ: "ຄູເປັນໃຈກາງຂອງຄຸນນະພາບການສຶກສາ. ລັດຖະບານອົດສະຕຣາລີ ພູມໃຈທີ່ໄດ້ສະໜັບສະໜູນລະບົບຜູ້ເຮັດວຽກສຶກສານິເທດພາຍໃນ ທີ່ເປັນລະບົບທັນຍຸກສະໄໝຂອງລັດຖະບານລາວ, ເຊິ່ງຮັບປະກັນວ່າ ເຖິງຄູຈະຢູ່ໃນໂຮງຮຽນຫ່າງໄກ ກໍສາມາດໄດ້ຮັບການຊ່ວຍເຫຼືອຢ່າງເປັນປົກກະຕິ ແລະ ມີຄຸນນະພາບສູງ. ລະບົບການຊ່ວຍເຫຼືອຄູທີ່ມີປະສິດທິພາບ ຄືກັບລະບົບຜູ້ເຮັດວຽກສຶກສານິເທດພາຍໃນນີ້ ແມ່ນສໍາຄັນຫລາຍທີ່ຈະຊ່ວຍໃຫ້ຄູມີແຮງບັນດານໃຈໃນການສອນ."

ປີນີ້, ລະບົບ ຜູ້ເຮັດວຽກສຶກສານິເທດພາຍໃນ ຈະໄດ້ຮັບການເສີມຂະຫຍາຍຕື່ມ ດ້ວຍການຝຶກອົບຮົມ ຜູ້ເຮັດວຽກສຶກສານິເທດພາຍນອກ ຈໍານວນ 141 ຄົນຈາກ ສກມ 30 ເມືອງ, ເພື່ອຮັບປະກັນການໃຫ້ການຊ່ວຍເຫຼືອຄູໄດ້ຢ່າງສົມບູນແບບ ແລະ ຫຼາຍລະດັບຕະຫຼອດສົກຮຽນ.

ຄູຝຶກທ່ານໜຶ່ງຈາກ ວຄ ໄດ້ກ່າວວ່າ: "ໃນການຝຶກອົບຮົມນີ້, ພວກເຮົາເນັ້ນໃສ່ວິທີການປະຕິບັດ. ຕົວຢ່າງ: ຜູ້ເຮັດວຽກສຶກສານິເທດພາຍໃນທີ່ເຂົ້າຮ່ວມຈະໄດ້ສ້າງແຜນການສອນຫ້ອງຄວບ, ເບິ່ງວິດີໂອສໍາລັບການພັດທະນາຄູທີ່ກ່ຽວກັບການສອນບົດຮຽນວິຊາພາສາລາວ ແລະ ສາລະຄະດີຄູຕົວແບບຕອນການສອນຫ້ອງຄວບ ພ້ອມທັງທົດລອງການນໍາໃຊ້ເຄື່ອງມືປະເມີນຕົນເອງຂອງຄູ. ເປັນການຝຶກອົບຮົມທີ່ປະຕິບັດຕົວຈິງ, ມີການປະກອບສ່ວນ ແລະ ກ່ຽວຂ້ອງໂດຍກົງກັບກິດຈະກໍາຕ່າງໆໃນຫ້ອງຮຽນ. ບັນດາກິດຈະກໍາທີ່ນໍາມາປະຕິບັດ ບໍ່ພຽງແຕ່ສ້າງທັກສະໃຫ້ແກ່ຜູ້ເຂົ້າຮ່ວມ, ແຕ່ຍັງສົ່ງເສີມການຮ່ວມມື ແລະ ການສ້າງຄວາມໝັ້ນໃຈ."

ໃນສົກຮຽນ 2024-2025, ທີມງານ ຜູ້ເຮັດວຽກສຶກສານິເທດພາຍໃນ ໄດ້ຈັດກິດຈະກໍາ ການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ໃຫ້ແກ່ຄູ 41.774 ຄົນ, ຊ່ວຍສົ່ງເສີມການສອນຫຼັກສູດຊັ້ນປະຖົມສຶກສາສະບັບປັບປຸງໃນຫ້ອງຮຽນ ແລະ ປັບປຸງເງື່ອນໄຂການຮຽນຂອງເດັກນ້ອຍໃນເຂດດ້ອຍໂອກາດ.

ທ່ານ ນາງ ວາເນັດຊາ ເຣກາທີ ໄດ້ກ່າວສະຫຼຸບໃນຕອນທ້າຍວ່າ: "ໂດຍການຊ່ວຍໃຫ້ຄູຮູ້ສຶກໝັ້ນໃຈວ່າໄດ້ຮັບການຊ່ວຍເຫຼືອ, ເຫັນຄວາມສໍາຄັນ ແລະ ມີຄວາມພ້ອມໃນແກ້ໄຂສິ່ງທ້າທາຍທີ່ໄດ້ພົບຕົວຈິງໃນຫ້ອງຮຽນ, ການລິເລີ່ມນີ້ແມ່ນຈະສົ່ງຜົນໂດຍກົງຕໍ່ການຮຽນການສອນທີ່ດີຂຶ້ນເພື່ອນັກຮຽນໃນ ສປປ ລາວ."

| 2025-08-27 | BEQUAL Website |
|---|---|

# Ministry of Education and Sports and Australia strengthen internal pedagogical support to improve teaching quality

POSTED ON 27 AUGUST 2025



Singing Panoy loi pai loi ma song from Lao Language G1 first lesson

**New training will prepare over 1,100 school-based support staff to help teachers with Lao language instruction, multigrade teaching, inclusive education, and planning for the new school year**

From 4-29 August, the Ministry of Education and Sports of Lao PDR (MoES), with support from the Australian Government through the Basic Education Quality and Access in Lao PDR (BEQUAL) program, is conducting a sixth round of training for Internal Pedagogical Support (IPS) staff in BEQUAL's 30 target districts.

The IPS system was introduced in 2023 to ensure that primary school teachers, particularly in remote and disadvantaged areas, receive regular, practical, and peer-based support throughout the school year. Established by MoES with support from Australia, the system empowers experienced teachers and school leaders to act as in-school coaches and mentors. The IPS staff help their colleagues improve their teaching practices by providing continuous professional development (CPD) through regular advice, classroom visits, co-teaching, feedback, and follow-up guidance. Initially launched in 30 target districts across seven BEQUAL-supported provinces, Phongsaly, Luang Namtha, Bokeo, Houaphan, Xiangkhouang, Khammouane, and Savannakhet. MoES recognises the importance and the outcomes of the system and is planning to extend the approach to more provinces.

More than 1,126 IPS staff (53% women, 47% from ethnic background), who are experienced teachers and principals selected for their commitment to supporting peers, will participate in the training at their local district education offices. The training is being facilitated by 100 technical staff from the Teacher Training Colleges (TTCs) of Luang Namtha, Xiangkhouang, and Savannakhet, with District Education and Sports Bureaus of the 30 districts providing training facilities and equipment.



Micro-teaching session to practice Spoken Lao activities



Micro-teaching session to practice Spoken Lao activities

Assoc. Prof. Ms. Vongdeuane Osay, Director General, Department of Teacher Education (DTE), said: ***"IPS workshop 6 builds on the progress of previous training and responds to teachers' evolving needs. It will equip IPS staff to help their peers to teach the Lao Language Grade 1 curriculum effectively, apply multigrade teaching strategies, and plan support for the 2025–26 school year. We are investing in teacher support because motivated, well-trained teachers are central to student learning success."***

The training includes ten detailed sessions over five days. It begins with an in-depth focus on Grade 1 Lao Language, including the importance of the lesson introduction and how to apply the new seven step approach for teaching sounds and writing. This is followed by a comprehensive, three-part module on multigrade teaching, where IPS staff will learn how to design, implement and support multigrade lesson delivery -essential in many remote Lao schools.

Participants will go on to focus on the new Spoken Lao teaching and learning approach, to develop teaching strategies that help students develop spoken Lao language communication skills.

Later sessions introduce the Teacher Self-Assessment Tool and Primary Teaching Standards, which IPS staff can use to help teachers identify learning needs and develop individual CPD plans. The workshop concludes with a focus on inclusive education and social norms, addressing how gender, age, and hierarchy can create barriers to accessing CPD, and how to foster inclusive school environments. The final session supports IPS to develop Semester 1 teacher support plans aligned with identified learning needs.

Ms. Vanessa Hegarty, First Secretary, Australian Embassy, added: ***"Teachers are at the heart of education quality. Australia is proud to support the Government of Lao PDR's innovative IPS system, which ensures that even teachers in remote schools receive regular, high-quality support. Strong professional support systems like the IPS system are vital for helping teachers stay motivated."***



Pair work for plan Multigrade Lao language lesson



Session on lesson preparation

This year, the IPS system will be further reinforced with the training of 141 external pedagogical support staff from 30 DESBs, ensuring comprehensive, multi-level support for teachers throughout the academic year.

One of the TTC trainers shared: ***"In this workshop, we focus on practical strategies. For example, IPS participants will create multigrade lesson plans, watch the teacher development video on Spoken Lao lessons and the Role Model docuseries episode on multigrade, and practice using the teacher self-assessment tool. It's hands-on, collaborative, and directly relevant to classroom realities. These activities not only build skills but also foster collaboration and confidence."***

In the 2024-2025 academic year, IPS teams facilitated 41,774 teacher CPD activities, helping to embed the revised primary curriculum in classrooms and improving learning conditions for children in disadvantaged areas.

Ms. Hegarty concluded: ***"By helping teachers feel supported, valued, and equipped to manage real classroom challenges, this initiative is directly contributing to better teaching and learning for Lao students."***

